**Disability Rights California**

5013.12
Lao
06/26/02
**SACRAMENTO LEGAL OFFICE**
100 Howe Avenue, Suite 235 North, Sacramento, CA 95825-8202
Telephone: (916) 488-9950 Fax: (916) 488-9960
Toll Free/TTY/TDD: (800) 776-5746

Note: When this publication was originally published, we were known as Protection & Advocacy, Inc. (PAI). In October 2008, we changed our name from PAI to Disability Rights California.

# ຊຸດເອກະສານການພິຈາລະນາເລື່ອງເພື່ອຟັງຄວາມເປັນທັມແລະການປະເມີນຕົນເອງ
## (IHSS Fair Hearing and Self-Assessment Packet)
## ຄຳແນະນຳ

ຊຸດໜັງສືລາຍລະອຽດນີ້ມີໄວ້ເພື່ອຊ່ວຍທ່ານແທນໂຕເອງແລະຄົນອື່ນໄດ້ໃນການພິຈາລະນາເລື່ອງເພື່ອຟັງຄວາມເປັນທັມເມື່ອມີການຂັດແຍ່ງກັນກ່ຽວກັບຈຳນວນຊົ່ວໂມງການບໍຣິການໂຄງການ IHSS (ການບໍຣິການຊ່ວຍເຫຼືອພາຍໃນເຮືອນ) ຫຼືຊົ່ວໂມງບໍຣິການດູແລທາງແພທສ່ວນບຸກຄົນທີ່ທ່ານຕ້ອງການ. ຊຸດໜັງສືລາຍລະອຽດນີ້ຈະຊ່ວຍທ່ານຕຽມພ້ອມເພື່ອການປະເມີນເຂົ້າໂຄງການຂ້າງຕົ້ນຂອງພະນັກງານບໍຣິການໂຄງການ IHSS ຂອງກົງຣັຖ ຫຼືການທວນຄືນປະຈຳປີ. ການເຮັດການປະເມີນໂຕເອງຈະຊ່ວຍທ່ານຄຳນວນຈຳນວນຊົ່ວໂມງທີ່ທ່ານຄິດວ່າຕ້ອງການແລະສິ່ງທີ່ຕ້ອງອະທິບາຍໃຫ້ແກ່ພະນັກງານຜູ້ທີ່ດຳເນີນການປະເມີນ. ຄຳແນະນຳນີ້ຈະອະທິບາຍທຸກສິ່ງກ່ຽວກັບເລື່ອງໂຄງການ IHSS ໄດ້ດຳເນີນງານແບບໃດ.

ການປະເມີນຕົນເອງ ຈະຊ່ວຍທ່ານຄຳນວນວ່າທ່ານຄິດວ່າທ່ານຕ້ອງການເວລາເທົ່າໃດຊົ່ວໂມງແລະຈະຊີ້ນຳເອົາພະນັກງານໃດມາເປັນຜູ້ເຮັດການປະເມີນ. ເພື່ອລາຍລະອຽດເພີ້ມເຕີມກ່ຽວກັບໂຄງການບໍຣິການ IHSS, ໃຫ້ໂທຣ໌ຫາ PAI ແລະຂໍໜັງສືທີ່ມີສິ່ງກ່ຽວຂ້ອງກັບໂຄງການບໍຣິການ IHSS? , ໜັງສືຈຳໜ່າຍ PAI ເລກທີ 5168.01. ປື້ມຄູ່ມືການແນະນຳນີ້ບໍ່ໄດ້ບໍ່ໄດ້ອະທິບາຍຫລາຍໆຢ່າງກ່ຽວກັບວິທີເຮັດວຽກຂອງໂຄງການບໍຣິການ IHSS. ຖ້າຫາກວ່າທ່ານມີຄຳຖາມກ່ຽວກັບເລື່ອງອື່ນທີ່ບໍ່ໄດ້ອະທິບາຍໃນຄຳແນະນຳນີ້: ເຊັ່ນຄວາມພົວພັນກັນໃນຣະຫວ່າງໂຄງການຊ່ວຍເຫຼືອ Veteran’s Aid ແລະໂຄງການ Attendance ແລະ IHSS, ຄວາມຕ້ອງການທີ່ບໍ່ສຳເຣັດ, ການພັກຜ່ອນເພື່ອສູ່ຄວາມແຮງ, "ການຈ່າຍເງິນຊ່ວຍເຫຼືອເກີນ", ແລະອື່ນໆເປັນຕົ້ນ.

ມີສີ່ພາກໃນຊຸດເອກະສານນີ້.

1. ພາກທີນຶ່ງໄດ້ອະທິບາຍວິທີຕຽມພ້ອມເພື່ອການປະເມີນ, ວິທີຂໍເອົາແລະຕຽມພ້ອມເພື່ອການພິຈາລະນາເລື່ອງເພື່ອຟັງຄວາມເປັນທັມ, ແລະຈະຄາດໝາຍແນວໃດຢູ່ທີ່ພິຈາລະນາເລື່ອງເພື່ອຟັງຄວາມເປັນທັມ.
2. ພາກທີສອງເປັນການຮິບໂຮມສາຍເຫດທີ່ຜູ້ຮັບການບໍຣິການໂຄງການ IHSS ໄດ້ໃຊ້ເພື່ອອະທິບາຍວ່າເພາະເຫດໃດເຂົາຕ້ອງການເວລາເພີ້ມເຕີມຂອງໂຄງການບໍຣິການ IHSS.
3. ພາກທີສາມມີໃບຂໍ້ມູນກ່ຽວກັບການບໍຣິການໂຄງການ IHSS ໂດຍສະເພາະ: ໂຄງການບໍຣິການ IHSS ສຳລັບເດັກ, ການຄວບຄຸມການປ້ອງກັນ, ການບໍຣິການທາງພະຍາບານ, ແລະການບໍຣິການໂຄງການ IHSS ສຳລັບຄົນທີ່ພິການເປັນໂຣຄຈິດ.
4. ພາກທີສີ່ແມ່ນໃບຄິດໄລ່ຄຳນວນເພື່ອຄິດໄລ່ຊົ່ວໂມງທີ່ທ່ານຕ້ອງການ.

# I. ວິທີດຳເນີນການປະເມີນແລະພິທີດຳເນີນການພິຈາຣະນາເຣື່ອງເພື່ອຟັງຂໍຄວາມເປັນທັມ

## A. ການປະເມີນ

ເມື່ອທ່ານຂໍສມັກເອົາການບໍຣິການໂຄງການ IHSS ເທື່ອທຳອິດ, ຢ່າງນ້ອຍປີລະເທື່ອ, ແລະທຸກເທື່ອທີ່ທ່ານຮ້ອງຂໍເຮັດ, ທ່ານຕ້ອງໄດ້ຮັບການປະເມີນຈາກກົງຣັຖ. ພະນັກງານກົງຣັຖຈະມາເຮືອນທ່ານເພື່ອຕັດສິນໃຈວ່າທ່ານມີສິທທີ່ຈະໄດ້ຮັບການບໍຣິການໃດແລະຈະສາມາດໄດ້ຮັບໄດ້ຈັກຊົ່ວໂມງຕໍ່ເດືອນ. ທາງກົງຣັຖຄວນດຳເນີນການປະເມີນພາຍໃນ 30 ວັນຫຼັງຈາກວັນທີ່ທ່ານໄດ້ຮ້ອງຂໍ.

### 1. ວິທີວັດແທກຄວາມຕ້ອງການການບໍຣິການໂຄງການ IHSS

a. ມາຕະຖານທົ່ວໄປສຳລັບການວັດແທກ

ມາຕະຖານທົ່ວໄປສຳລັບການວັດແທກຄວາມຕ້ອງການບໍຣິການໂຄງການ IHSS (ສົມມຸດວ່າຜູ້ພິການບໍ່ສາມາດປະກອບການບໍຣິການຕາມທີ່ຕ້ອງການຍ້ອນອາການພິການຂອງເຂົາ) ວດ້ບົ່ງໄວ້ໃນປະມວນສະຫວັດດີການແລະສະຖາບັນໝວດທີ 12300. ຜູ້ພິການມີສິທທີ່ຈະໄດ້ການບໍຣິການທີ່ຕ້ອງການເພື່ອເຮັດໃຫ້ເຂົາສາມາດ (1) ອາສັຍໂດຍມີຄວາມປອດພັຍຢູ່ໃນເຮືອນຂອງເຂົາຫຼືໃນເຮືອນພັກທີ່ເຂົາຈະເລືອກເອົາ, ແລະ/ຫຼື (2) ຈັດຕັ້ງແລະຮັກສາການພັກພາອາສັຍເປັນເອກະຣາດ.[1] ຈຳນວນເວລາທີ່ຈະຖືກອະນຸມັດໄດ້ອີງຕາມຈຳນວນເວລາທີ່ຄົນງານທັມມະດາທີ່ໄດ້ຮັບຄ່າແຮງງານຕ່ຳທີ່ສຸດຕ້ອງໃຊ້ເຮັດວຽກທີ່ອະນຸມັດ. ຈະບໍ່ອະນຸມັດເວລາສຳລັບການບໍຣິການທີ່ໃຊ້ເພື່ອແຕ່ "ຄວາມສະບາຍໃຈ" ຂອງຜູ້ຮັບການບໍຣິການໂຄງການ IHSS ເທົ່ານັ້ນ. ຈຳນວນຊົ່ວໂມງຫຼາຍທີ່ສຸດແມ່ນ 283 ຊົ່ວໂມງ ຕໍ່ເດືອນ.

b. ຄຳແນະນຳຈຳນວນເວລາເພື່ອເຮັດວຽກສະເພາະຂອງຣັຖ

ມີຄຳແນະນຳສະເພາະສຳລັບ "ຈຳນວນເວລາເພື່ອເຮັດວຽກ" ຂອງຣັຖ:

*i.* ການບໍຣິການທຳວຽກບ້ານເຮັດຄວາມສະອາດໃນເຮືອນ, 6 ຊົ່ວໂມງຕໍ່ເດືອນ;

*ii.* ການຊັກເຄື່ອງຖ້າຈັກຊັກເຄື່ອງມີຢູ່ໃນເຮືອນ, 1 ຊົ່ວໂມງຕໍ່ອາທິດ;

*iii.* ການຊັກເຄື່ອງຖ້າທ່ານຕ້ອງໄປຊັກຢູ່ນອກເຮືອນ, 1.5 ຊົ່ວໂມງຕໍ່ອາທິດ;

*iv.* ການໄປຕະຫຼາດ, 1 ຊົ່ວໂມງຕໍ່ອາທິດ;

*v.* ການໄປເຮັດທຸຣະກິດອື່ນໆ, 30 ນາທີຕໍ່ອາທິດ

ຕາມທັມມະດາ, ຖ້າມີຫຼາຍກວ່າຄົນນຶ່ງອາສັຍຢູ່ໃນຄົວເຮືອນ, ຈະຫຼຸດຈຳນວນເວລາເຮັດວຽກຢູ່ໃນຄຳແນະນຳ. ຕົວຢ່າງ, ໃນຄອບຄົວທີ່ມີສີ່ຄົນ ອັດຕາສ່ວນຂອງຜູ້ພິການສຳລັບການບໍຣິການທຳເຮືອນໃຫ້ສະອາດຈະໄດ້ມີ 1.5 ຊົ່ວໂມງຕໍ່ເດືອນ.

***ກົດຣະບຽບມີການຖືວ່າຈະໃຊ້ຄຳແນະນຳຈຳນວນເວລາເຮັດວຽກອາດໃຊ້ໄດ້ໃນແຕ່ກໍຣະນີທີ່ເໝາະສົມເພື່ອໃຫ້ຖືກຕ້ອງກັບຄວາມຕ້ອງການສະເພາະຂອງຜູ້ຮັບເທົ່ານັ້ນ.*** ພາກ II ຂອງດເອກະສານນີ້ຈັດຫາຕົວຢ່າງກ່ຽວກັບເວລາການໃຊ້ຄຳແນະນຳໃນທາງບໍ່ເໝາະສົມຍ້ອນສະພາບການສ່ວນຕົວ.

[1] ທ່ານບໍ່ສາມາດປະກອບສ່ວນໃນການບໍຣິການຕາມທີ່ຕ້ອງການຖ້າການປະກອບສ່ວນຈະເປັນສາຍເຫດໃຫ້ເຈັບປວດ.

c. ປື້ມບັນທຶກປະຈຳວັນ

ສ່ວນສຳຄັນຂອງການກະກຽມເພື່ອການພິຈາຣະນາເຣື່ອງເພື່ອຟັງຄວາມເປັນທັມຫຼືເພື່ອການສຳຣວດໂດຍພະນັກງານບໍຣິການໂຄງການ IHSS ຂອງກົງຣັຖ ແມ່ນການຈັດປື້ມບັນທຶກປະຈຳວັນທີ່ໄດ້ຈົດບັນທຶກສິ່ງທີ່ເຮັດສຳເຣັດໃນແຕ່ລະວັນແລະຈຳນວນເວລາທີ່ຕ້ອງໃຊ້ທຳງານດັ່ງກ່າວ. ພວກເຮົາໄດ້ພົບເຫັນວ່າຄົນບໍ່ຄ່ອຍມັກຮູ້ຈັກພາລະທັງໝົດທີ່ຕ້ອງເຮັດໃນການດູແລຮັກສາຄົນແລະຈຳນວນເວລາທີ່ຕ້ອງໃຊ້ເພື່ອເຮັດພາລະແຕ່ລະຢ່າງນັ້ນ. ຕົວຢ່າງ, ຖ້າມີອຸບັດຕິເຫດໃນຫ້ອງນ້ຳ, ເວລາທຳຄວາມສະອາດ (ຊຶ່ງເປັນສ່ວນນຶ່ງຂອງການເບິ່ງແຍງທາງຖ່າຍໜັກແລະຖ່າຍເບົາ) ບໍ່ແມ່ນພຽງແຕ່ການທຳຄວາມສະອາດຢ່າງດຽວເທົ່ານັ້ນ, ແຕ່ເປັນເວລາທີ່ຕ້ອງໃຊ້ໃນການເອົາເຄື່ອງໃຊ້ເພື່ອທຳຄວາມສະອາດອອກມາແລະການເກັບມ້ຽນໄວ້ທີ່ເກົ່າອີກດ້ວຍ. ຖ້າຂອງແຫຼວຮ່າງກາຍຫຼືອາຈົມມີການກ່ຽວພັນກັນ, ທ່ານຕ້ອງນັບເວລາເພີ້ມອີກຕື່ມທີ່ຕ້ອງໃຊ້ເພື່ອຮັກສາປ້ອງກັນແບບຈັກກະວານທົ່ວໄປ. ອີກຕື່ມ, ເວລາທີ່ຕ້ອງໃຊ້ເພື່ອເຮັດພາລະສະເພາະອາດປ່ຽນແປງຕາມແຕ່ລະວັນໄປ. ຕົວຢ່າງ, ອາດຈະຕ້ອງໃຊ້ເວລາໃນວັນນຶ່ງຫຼາຍກວ່າວັນຕໍ່ໄປສອງເທົ່າຕົວເພື່ອຊ່ວຍນຸ່ງເຄື່ອງໃຫ້ຄົນທີ່ເປັນອຳມະພາດເນື່ອງຈາກສມອງໄດ້ຮັບບາດເຈັບຈຶ່ງມີຂາແຂງ່ງນ່ານຍ້ອນຂາແລະແຂນມີການຫົບໄປມາແຕກຕ່າງກັນ. ການອະນຸມັດບໍຣິການໂຄງການ IHSS ຈະອີງຕາມຈຳນວນແລະເວລາຊົ່ວໂມງສະເລັ່ຽ,
ຈຶ່ງເປັນສິ່ງສຳຄັນທີ່ຕ້ອງຮູ້ຈັກໄລຍະເວລາທີ່ຕ້ອງໃຊ້ປະກອບພາລະ.

## 2. ການເຮັດການປະເມີນຂອງຕົນເອງ

ກ່ອນການພິຈາຣະນາເຣື່ອງຟັງຄວາມເປັນທັມໄດ້ເກີດຂຶ້ນ, ໃຫ້ປະກອບຂຽນໃບຄຳນວນບໍຣິການໂຄງການ IHSS ທີ່ມີຢູ່ໃນໝວດ IV ໃຫ້ສຳເຣັດ. ໃບຄຳນວນ, ຄືກັນກັບແບບຟອມປະເມີນຂອງກົງຣັຖ, ໄດ້ອີງຕາມໄລຍະເວລານຶ່ງອາທິດ. ຍົກເວັ້ນສຳລັບການເຂົ້າເອົາການບໍຣິການທຳຄວາມສະອາດບ້ານຊຶ່ງນານເປັນເດືອນ. ລາຍຊົ່ວໂມງໄດ້ຖືກຄຳນວນເປັນນຶ່ງສ່ວນສິບ:

| | | |
|---|---|---|
| .05 = 03 ນາທີ | .40 = 24 ນາທີ | .80 = 48 ນາທີ |
| .08 = 05 ນາທີ | .42 = 25 ນາທີ | .83 = 50 ນາທີ |
| .10 = 06 ນາທີ | .45 = 27 ນາທີ | .85 = 51 ນາທີ |
| .15 = 09 ນາທີ | .50 = 30 ນາທີ | .90 = 54 ນາທີ |
| .17 = 10 ນາທີ | .55 = 33 ນາທີ | .92 = 55 ນາທີ |
| .20 = 12 ນາທີ | .58 = 35 ນາທີ | .95 = 57 ນາທີ |
| .25 = 15 ນາທີ | .60 = 36 ນາທີ | 1.00 = 60 ນາທີ |
| .30 = 18 ນາທີ | .65 = 39 ນາທີ | 2.00 = 120 ນາທີ |
| .33 = 20 ນາທີ | .70 = 42 ນາທີ | 3.00 = 180 ນາທີ |
| .35 = 21 ນາທີ | .75 = 45 ນາທີ | 4.00 = 240 ນາທີ |
| | | 5.00 = 300 ນາທີ |

ພວກເຮົາພົບເຫັນວ່າຈະສະດວກກວ່າໃຫ້ຄຳນວນເວລາປະຈຳອາທິດເປັນນາທີແລ້ວປ່ຽນຊົ່ວໂມງແລະນາທີໃຫ້ເປັນສ່ວນສິບ. ຕົວຢ່າງ, ຖ້າເວລາທີ່ໃຊ້ຊ່ວຍຄົນນັ່ງແລະລຸກຂຶ້ນຈາກອີດ ແລະຈັບໄວ້ເພື່ອບໍ່ໃຫ້ລົ້ມເວລານັ່ງອີດ, ແລະຕື່ມຄວາມສະອາດທີ່ກ່ຽວຂ້ອງເຊັ່ນການລ້າງມື, ເປັນສະເລັ່ຽ 6 ນາທີທຸກເທື່ອ, ແລະຈຳນວນເທື່ອທີ່ເຮັດຕໍ່ວັນແມ່ນ 5 ເທື່ອຕໍ່ວັນໃນອາທິດທັມມະດາເມື່ອຢູ່ໂຮງຮຽນຫຼືໂຄງການຝຶກຝົນ ແລະ 7 ເທື່ອຕໍ່ວັນໃນວັນເສົາວັນອາທິດ, ຈຳນວນເວລາຕໍ່ອາທດິຈະເປັນ (5 x 6 ນາທີ x 5 ວັນ) + (7 x 6 ນາທີ x 2 ວັນ) = 234 ນາທີ = 3 ຊົ່ວໂມງ 54 ນາທີ = 3.9 ຊົ່ວໂມງ.

ສຸດທ້າຍນີ້, ທ່ານຈະຕ້ອງຂຽນສາຍເຫດລົງໃສ່ເຈັ້ຍຕ່າງຫາກທີ່ນຳທ່ານໃຫ້ເຊື່ອວ່າເພາະເຫດໃດທ່ານຈຶ່ງຕ້ອງການເວລາບໍຣິການໂຄງການ IHSS ເພີ້ມຕື່ມ. ເພື່ອຊ່ວຍທ່ານ, ໝວດ II ຂອງຊຸດເອກະສານນີ້ມີລາຍການ "ສາຍເຫດຊຶ່ງຕ້ອງການເວລາບໍຣິການໂຄງການ IHSS ເພີ້ມຕື່ມ" ທີ່ພວກເຮົາເຄີຍພົບເຫັນໃນເຣື່ອງກໍຣະນີສ່ວນຕົວ. ສາຍເຫດບາງຢ່າງນີ້ອາດໃຊ້ໄດ້ໃນກໍຣະນີຂອງທ່ານ.

## 3. ການຕຽມໂຕພ້ອມແລ້ວເພື່ອການປະເມີນຂອງກົ່ງຣັດ

ຈຸດປະສົງຂອງພະນັກງານກົ່ງຣັດໃນການພົບພໍ້ຢູ່ທີ່ເຮືອນກໍເພື່ອຕັດສິນວ່າຜູ້ຮັບຫຼືຜູ້ສມັກຂໍການບໍຣິການໂຄງການ IHSS ສາມາດຫຼືບໍ່ສາມາດເຮັດໄດ້ເພື່ອຊ່ວຍຕົນເອງແລະ, ດັ່ງນັ້ນຈຶ່ງຕ້ອງການບໍຣິການໃດແລະຕ້ອງການເວລາເທົ່າໃດເພື່ອດຳເນີນການບໍຣິການເຫຼົ່ານັ້ນໄດ້. ໜ້າທີ່ຂອງທ່ານຄືວ່າຊ່ວຍພະນັກງານກົ່ງຣັດໃຫ້ເຂົ້າໃຈບັນຫາຂອງການຮັກສາແລະຄວາມຕ້ອງການພິເສດທັງໝົດແລະມັນມີຄວາມໝາຍແນວໃດກ່ຽວກັບຈຳນວນເວລາທີ່ຕ້ອງມີເພື່ອໃຊ້. ການປຶກສາກັນຢ່າງຊື່ສັດແລະເປີດເຜີຍເປັນສິ່ງສຳຄັນ. ຢ່າຖືບັນຫາດ້ານການພິການແລະຄວາມຕ້ອງການດ້ານການຮັກສາຂອງທ່ານວ່າບໍ່ສຳຄັນ ເພາະໃນສຸດທ້າຍນັ້ນທ່ານອາດບໍ່ໄດ້ຮັບຈຳນວນຊົ່ວໂມງທີ່ທ່ານຕ້ອງການ. ເຖິງແມ່ນວ່າທ່ານອາດຮູ້ສຶກໜ້າອາຍໃນການອະທິບາຍກໍຕາມ, ການອະທິບາຍເຣື່ອງຢ່າງຄົບຖ້ວນເພື່ອພະນັກງານກົ່ງຣັດໄດ້ເຂົ້າໃຈສະພາບການຂອງທ່ານເປັນສິ່ງສຳຄັນ.

ກ່ອນພະນັກງານກົ່ງຣັດໄດ້ໄປຮອດເຮືອນ, ພວກເຮົາກໍແນະນຳໃຫ້ທ່ານຂຽນປະກອບໃບຄຳນວນການບໍຣິການໂຄງການ IHSS ຢູ່ໃນໝວດທີ IV ໂດຍໃສ່ຈຳນວນຊົ່ວໂມງທີ່ທ່ານຄິດວ່າຕ້ອງການ. (ໃຫ້ຈຳໄວ້ວ່າ, ທາງກົ່ງຣັດຈະອະນຸມັດແຕ່ເວລາທີ່ຈຳເປັນຕ້ອງໃຊ້ເທົ່ານັ້ນ ແລະຈະບໍ່ອະນຸມັດເວລາເພີ້ມຕື່ມເພື່ອການບໍຣິການ "ຄວາມສະບາຍໃຈ". ຕົວຢ່າງຂອງການບໍຣິການເພື່ອຄວາມສະບາຍໃຈກໍຄືການປັດຖູຂີ້ຝຸ່ນເພີ້ມຕື່ມເພື່ອເຮັດໃຫ້ສິ່ງງາມຕາ). ທ່ານຄວນຕຽມພ້ອມເພື່ອອະທິບາຍ. ເຣື່ອງຊົ່ວໂມງທີ່ທ່ານຈົດໃສ່ໃບຄຳນວນ: ມີວຽກແນວໃດແດ່ທີ່ທ່ານຕ້ອງໄດ້ເຮັດ, ທ່ານໄດ້ຄຳນວນເວລາຂອງແຕ່ລະງານຢ່າງໃດ, ມີຂໍ້ມູນພິເສດແນວໃດທີ່ຕ້ອງພິຈາຣະນາ, ແລະຖ້າວ່າກ່ຽວພັນກັນ, ເປັນຫຍັງຈຶ່ງວ່າຄຳແນະນຳຈຳນວນເວລາເພື່ອເຮັດວຽກຂອງຣັດບໍ່ເໝາະສົມສຳລັບສະພາບການຂອງທ່ານ. ທ່ານອາດປາຖະໜາຢາກເຮັດບັນຊີລາຍຊື່ຂໍ້ຕ່າງໆເພື່ອວ່າທ່ານຈະບໍ່ໄດ້ຫຼົງລືມສິ່ງໃດນຶ່ງໄປໄດ້.

ທ່ານສົມຄວນຕຽມພ້ອມທີ່ຈະອະທິບາຍວິທີທີ່ທ່ານໄດ້ໃຊ້ຄຳນວນຊົ່ວໂມງທີ່ຕ້ອງການ, ໂດຍສະເພາະໃນກໍຣະນີທີ່ມີຄວາມແຕກຕ່າງກັນຣະຫວ່າງຈຳນວນທີ່ທາງກົ່ງຣັດໄດ້ອະນຸມັດໃຫ້ກ່ອນ ແລະຈຳນວນທີ່ທ່ານເຊື່ອວ່າຕ້ອງການໃນປະຈຸບັນນີ້.

ໃນຖານະທີ່ເປັນສ່ວນນຶ່ງຂອງພິທີດຳເນີນການຂອງກົ່ງຣັດ, ທ່ານໝໍປະຈຳໂຕຂອງທ່ານຈະໄດ້ຮັບແບບຟອມທີ່ຂໍເອົາລາຍລະອຽດກ່ຽວກັບຄວາມສາມາດຂອງທ່ານໃນການຮັກສາດູແລໂຕເອງ, ສິ່ງທີ່ເຮັດໄດ້/ອາການເປັນພິການ, ແລະ – ໃນກໍຣະນີການຕັດສິນເຣື່ອງຄວາມຕ້ອງການການຄວບຄຸມການປ້ອງກັນ – ສະພາບການດ້ານໂຣຄຈິດຂອງທ່ານ. ຖ້າວ່າທ່ານຕ້ອງການບໍຣິການດ້ານການແພທ, ຈະສົ່ງແບບຟອມດ້ານການແພທໄປຫາທ່ານໝໍຜູ້ຮັບໃຊ້ການປິ່ນປົວ. ທ່ານຄວນຈະແຈ້ງຄລີນິກຫຼືສຳນັກງານຂອງທ່ານໝໍວ່າມັນກຳລັງມາຮອດເພື່ອວ່າທ່ານສາມາດປະກອບສ່ວນໃນການຂຽນແບບຟອມໃຫ້ສຳເຣັດ.

## 4. ລົງບັນທຶກເອກະສານຄວາມຕ້ອງການພິເສດ

ໃຫ້ເອົາການບັນທຶກເອກະສານເພື່ອຢັ້ງຢືນຄວາມຕ້ອງການພິເສດ – ຕົວຢ່າງ, ໃບແຈ້ງການຈາກທ່ານໝໍຂອງທ່ານອະທິບາຍວ່າທ່ານຕ້ອງການສະພາບແວດລ້ອມທີ່ປາສະຈາກຂີ້ຝຸ່ນເພາະວ່າທ່ານເປັນໂຣຄແພ້ຂີ້ຝຸ່ນ ຫຼືມີບັນຫາໂຣຄປອດ/ການຫາຍໃຈບໍ່ສະດວກ, ໃບແຈ້ງການຢັ້ງຢືນບັນຫາເຣື່ອງການຖ່າຍໜັກຖ່າຍເບົາ, ຫຼືຄວາມຕ້ອງການອັນນຶ່ງທີ່ຈະມີການສັບປ່ຽນຜ້າປູບ່ອນນອນຫຼາຍກວ່າສອງເທື່ອຕໍ່ເດືອນ. ຖ້າຫາກວ່າທ່ານຕ້ອງການລະດັບການເຄື່ອນໄຫວເພື່ອອອກກຳລັງກາຍ ຫຼືການບຳບັດຮ່າງກາຍ, ຫຼືການສັກຢາ, ຫຼືການປິ່ນປົວໂຣຄມະເຮັງ, ຫຼືການດູດອອກຈາກປອດ, ເປັນຕົ້ນ., ໃຫ້ເອົາແບບຟອມຈາກພະນັກງານຫ້ອງການບໍຣິການໂຄງການ IHSS ຂອງກົງຣັຖ ເພື່ອໃຫ້ທ່ານໝໍ/ຜູ້ບຳບັດຮ່າງກາຍຢັ້ງຢືນເຖິງຄວາມຕ້ອງການແລະການອະນຸມັດເພື່ອການບໍຣິການທາງດ້ານ**ການແພທທົ່ວໄປ.**

## 5. ການບໍຣິການໂຄງການ IHSS ສູ້ກັບໂຄງການຊ່ວຍເຫຼືອພະຍາບາລການບໍຣິການການຮັກສາດູແລສ່ວນບຸກຄົນ (Medi-Cal Personal Care Services Program (PCSP))

ການບໍຣິການໂຄງການ IHSS ແລະໂຄງການຊ່ວຍເຫຼືອ PCSP ໄດ້ບໍ ຣິຫານ ໂຄງການໂທນອັນດຽວ. ຮູບຮ່າງການຊ່ວຍເຫຼືອທາງພະຍາບາລ Medi-Cal ໄດ້ຄຸ້ມຄອງການບໍຣິການຮັກສາດູແລ ສ່ວນ ບຸກຄົນ ເວົ້າວ່າກົດຣະບຽບການບໍຣິການໂຄງການ IHSS ຈະຕ້ອງຕິດຕາມອອກມາໃຊ້ເມື່ອເວລາມີການອະນຸມັດການບໍຣິການທັງຫຼາຍ. ກົດຂອງສະຫວັດດີການແລະສະຖາບັນ Code § 14132.95 (i). ເມື່ອເວລາມີຄົນເວົ້າວ່າ "ການບໍຣິການໂຄງການ IHSS" ຕາມປົກ ກະຕິເຂົາເຈົ້າໝາຍເຖິງທັງສອງໂຄງການຄື IHSS ແລະໂຄງການ Medi-Cal PCSP. ການບໍຣິການຂອງຄົນສ່ວນມາກຈະຖືກ ຄຸ້ມຄອງ ໂດຍປະກັນພັຍ Medi-Cal PCSP ຊຶ່ງເປັນບ່ອນທີ່ທາງຣັຖະບາລກາງຈ່າຍຄ່າບໍຣິການເຄິ່ງນຶ່ງ – ຊຶ່ງກໍເທົ່າໆກັນກັບວ່າທາງຣັຖະບາລກາງໄດ້ຈ່າຍຄ່າການບໍຣິການ Medi-Cal ອັນອື່ນໆ. ຖ້າຫາກວ່າການບໍຣິການໄດ້ຖືກຈັດໃຫ້ໂດຍສາມີພັລະຍາ ຫຼືພໍ່/ແມ່ຂອງຜູ້ມີອາຍຸຕໍ່າກະສຽນ ຫຼືຖ້າວ່າໄດ້ມີການຈ່າຍຄ່າລ່ວງໜ້າ, ການບໍຣິການຖືກຄຸ້ມຄອງພາຍໃຕ້ສະເພາະຕັ້ງແຕ່ການບໍຣິການໂຄງການ IHSS ຍ້ອນວ່າມີກົດຣະບຽບຂອງປະກັນພັຍເມດີເຄດ (Medicaid) ຂອງຣັຖະບາລກາງ. ການບໍຣິການການແນະນຳການປ້ອງກັນໄດ້ຖືກຄຸ້ມຄອງສະເພາະພາຍໃຕ້ໂຄງການ IHSS ເທົ່ານັ້ນ. ໄດ້ມີຄວາມແຕກຕ່າງກັນກໍສະເພາະໃນກໍຣະນີທີ່ຈຳກັດເທົ່ານັ້ນ: ຖ້າວ່າໃຜຜູ້ນຶ່ງມີຫຼາຍໄດ້ສູງໂພດທີ່ຈະມີເງື່ອນໄຂສຳລັບການບໍຣິການໂຄງການ IHSS ແຕ່ວ່າໄດ້ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອໂຄງການ Medi-Cal ໂດຍບໍ່ຕ້ອງຮ່ວມເສັຽຄ່າພາຍໃຕ້ໂຄງການຊ່ວຍເຫຼືອຜູ້ສູງອາຍຸ & ເສັຽອົງຄະນີລາຍໄດ້ສະເລັ່ຽລຳດັບຍາກຈົນຂອງຣັຖະບາລກາງ (Aged & Disabled Federal Poverty Level Program ຫຼືເອີ້ນຊື່ຫຍໍ້ວ່າ "Pickle", ທີ່ວ່າຄົນນັ້ນອາດຈະຕ້ອງມີຮ່ວມເສັຽຄ່າ ຖ້າຫາກວ່າລາວໄດ້ຖືກຄັດເລືອກໃຫ້ໄດ້ລັບການຈ່າຍລ່ວງໜ້າ. ຖ້າຫາກວ່າໃຜຜູ້ນຶ່ງມີເງື່ອນໄຂສຳລັບໂຄງການ Medi-Cal ພາຍໃຕ້ນຶ່ງໃນຈຳນວນໂຄງການການຍົກເວັ້ນສະຖານທີ່ການປິ່ນປົວ (Nursing Facility Waivers) ຫຼືພາຍໃຕ້ການຍົກເວັ້ນສຳລັບປະຊາຊົນທີ່ມີການພັທະນາທາງດ້ານພິການ, ຊຶ່ງວ່າຄົນນັ້ນບໍ່ໄດ້ມີເງື່ອນໄຂສຳລັບການບໍຣິການທີ່ຖືກຈັດຫາໃຫ້ໂດຍສາມີພັລະຍາ ຫຼື, ຖ້າວ່າເປັນເດັກອາຍຸບໍ່ເຖິງກະສຽນ, ເປັນພໍ່/ແມ່.

## 6. ເມື່ອເວລາຄົນທີ່ເປັນພິການແຕ່ງງານ

ຖ້າຫາກວ່າຄົນທີ່ເປັນພິການກຳລັງຢູ່ກັບສາມີພັລະຍາ, ສາມີພັລະຍາ ຫຼືຜູ້ອື່ນອີກອາດເປັນຜູ້ໃຫ້ການບໍຣິການຮັກສາທີ່ໄດ້ລັບຈ່າຍໃຫ້ໂດຍການບໍຣິການໂຄງການ IHSS ຂອງການບໍຣິການສ່ວນບຸກຄົນທີ່ບໍ່ເປັນທາງແພທ (ໃຫ້ເບິ່ງຕາມກໍຣະນີທີ 4 ຢູ່ໃນແບບຟອມປຶ້ມຄຳນວນ) ແລະການບໍຣິການທາງການແພທທົ່ວໆໄປ. ຖ້າຫາກວ່າສາມີພັລະຍາໄດ້ອອກຈາກການງານເຕັມເວລາຫຼືວ່າຖືກກີດກັ້ນຈາກການໄດ້ລັບການງານເຕັມເວລາຍ້ອນວ່າ ບໍ່ມີຜູ້ໃຫ້ການປິ່ນປົວທີ່ເໝາະສົມອື່ນໆທີ່ຫວ່າງແລະ, ໂດຍເປັນຜົລຕາມມາ, ໄດ້ມີການສ່ຽງຕໍ່ການສັບຊ້ອນໄປຢູ່ນອກເຮືອນທີ່ບໍ່ເໝາະສົມ, ຫຼືການດູແລຮັກສາບໍ່ພຽງພໍ, ສາມີພັລະຍາອາດຈະຖືກຈ່າຍໃຫ້ຄ່າການແນະນຳການປ້ອງກັນແລະເພື່ອຕິດຕາມໄປຕາມນັດທາງແພທກັບຜູ້ໄດ້ຮັບທີ່ເປັນ ພິການ. ຖ້າຫາກວ່າສາມີພັລະຍາບໍ່ສາມາດຫຼືບໍ່ຫວ່າງ, ການບໍຣິການເຫຼົ່ານີ້ແລະການບໍຣິການໂຄງການ IHSSອາດຈະຖືກຈັດໃຫ້ໂດຍຜູ້ອື່ນ. ຄຳສັບທີ່ວ່າ "ບໍ່ຫວ່າງ". ລວມທັງເວລາເມື່ອວ່າສາມີພັລະຍາໄດ້ອອກໄປຂ້າງນອກຍ້ອນໄປເຮັດວຽກຫຼືຍ້ອນເຫດຜົນອັນອື່ນທີ່ຈຳເປັນ, ຫຼືເມື່ອເວລາສາມີພັລະຍາກຳລັງນອນຢູ່ ຫຼືໄປຊ່ວຍແກ້ໄຂຄວາມຕ້ອງການຂອງສະມາຊິກຄົນອື່ນໃນຄອບຄົວ.

### 7. "ພິການຢ່າງຮ້າຍແຮງ"

ເພື່ອຕັດສິນວ່າທ່ານມີສິດຖືກຖືວ່າເປັນຜູ້ຮັບທີ່ມີອາການ "ພິການທີ່ຮ້າຍແຮງ" ຫຼືບໍ່, ໃຫ້ບວກຈຳນວນຊົ່ວໂມງໃນພວກບໍລິການທີ່ "ສຳຄັນ ຫຼາຍ" ທີ່ບົ່ງໄວ້ໃສ່ໃບຄຳນວນດ້ວຍມີເຄື່ອງໝາຍກາດອກຈັນ (*). ຖ້າຫາກວ່າຈຳນວນຊົ່ວໂມງທັງໝົດມີເຖິງ 20 ຊົ່ວໂມງຂຶ້ນໄປຕໍ່ອາທິດ (ຮວມທັງການບໍລິການທີ່ບໍ່ໄດ້ມາຈາກການບໍລິການໂຄງການ IHSS)[2] ທ່ານມີສິດໃຫ້ຖືກຖືວ່າເປັນຄົນພິການຢ່າງຮ້າຍແຮງ.

ຖ້າຫາກວ່າທ່ານເປັນພິການຢ່າງຮ້າຍແຮງ, ທ່ານມີສິດທີ່ຈະໄດ້ (a) ການບໍລິການໂຄງການ IHSS ທີ່ຈະຄ້ຳປະກັນເປັນຂອງທ່ານເອງ ຫຼື ໄດ້ຜູ້ດແລຮັກສາໃຫ້ການບໍລິການການດແລສ່ວນບຸກຄົນຂອງປະກັນພັຍທາງແພທ Medi-Cal ທັງໆທີ່ຢູ່ໃນສັນຍາກັບຕົວແທນຂອງກົ່ງຣັ້ຖແລະ (b) ການຈ່າຍລ່ວງໜ້າດັ່ງນັ້ນວ່າທ່ານອາດຈະຈ່າຍຄົນເຮັດວຽກຂອງທ່ານແທນທີ່ຈະລໍຖ້າໃຫ້ຣັ້ຖະບາລຂອງຣັຖຈ່າຍໃຫ້ເຂົາເຈົ້າ.

ຖ້າຫາກວ່າທ່ານໄດ້ຖືກຕັດສິນວ່າຕ້ອງການການແນະນຳການປ້ອງກັນ, ທ່ານໄດ້ລັບການແນະນຳການປ້ອງກັນຈັກຊົ່ວໂມງແມ່ນຂຶ້ນກັບວ່າທ່ານ "ເປັນພິການຮ້າຍແຮງ" ຫຼືບໍ່.

ຖ້າຫາກວ່າທ່ານໄດ້ຖືກຕັດສິນວ່າບໍ່ ເປັນພິການທີ່ຮ້າຍແຮງແລະໄດ້ລັບ ການບໍລິການຮັກສາດູແລຂອງປະກັນພັຍ Medi-Cal, ທ່ານຈະໄດ້ລັບສູງເຖິງ 195 ຊົ່ວໂມງຂອງການແນະນຳການປ້ອງກັນຕໍ່ນຶ່ງເດືອນຊົ່ວໂມງໃຫ້ການແນະນຳການປ້ອງກັນແລະການບໍລິການຮັກສາດູແລສ່ວນບຸກຄົນຂອງປະກັນພັຍພະຍາບາລ Medi-Cal ຈະຖືກຫຼຸດລົງດັ່ງລວມຍອດມີບໍ່ເກີນ 283 ຊົ່ວໂມງ. ຖ້າວ່າມີເງື່ອນໄຂ, ຊົ່ວໂມງຂອງການແນະນຳການປ້ອງກັນຈະຖືກຫຼຸດລົງຊຶ່ງຕົກເປັນທັງໝົດບໍ່ເກີນ 283 ຊົ່ວໂມງ. ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ລັບການຮັກສາດູແລຂອງປະກັນພັຍ Medi-Cal ແຕ່ມີເງື່ອນໄຂໄດ້ລັບຊົ່ວໂມງຂອງບໍລິການໂຄງການ IHSS ເທົ່ານັ້ນເພາະວ່າຜູ້ດູແລເບິ່ງແຍງທ່ານເປັນສາມີພັລະຍາຂອງທ່ານ ຫຼືເປັນພໍ່/ແມ່ ຖ້າຫາກວ່າທ່ານເປັນເດັກທີ່ອາຍຸຍັງບໍ່ພົ້ນກະສຽນ ຫຼືທ່ານໄດ້ລັບການຈ້າຍລ່ວງໜ້າ, ຫຼັງຈາກນັ້ນຊົ່ວໂມງລວມຍອດຂອງທ່ານບໍ່ສາມາດສູງເກີນກວ່າ 195 ຊົ່ວໂມງຕໍ່ເດືອນນຶ່ງ.

ຖ້າຫາກວ່າທ່ານໄດ້ຖືກຕັດສິນວ່າເປັນຄົນພິການທີ່ຮ້າຍແຮງ, ຫຼັງຈາກນັ້ນຊົ່ວໂມງການແນະນຳການປ້ອງກັນຂອງທ່ານຈະມີຄວາມແຕກຕ່າງຣະຫ່ວາງຊົ່ວໂມງອັນອື່ນຂອງທ່ານ (ທັງໆທີ່ວ່າທ່ານຈະຢູ່ພາຍໃຕ້ໂຄງການຊ່ວຍເຫຼືອ Medi-Cal ຫຼືໂຄງການບໍລິການ IHSS ທີ່ເຫຼືອຢູ່ ຫຼືບໍ່ກໍຕາມ) ແລະ 283 ຊົ່ວໂມງ.

## B. ວິທີດຳເນີນການພິຈາຣະນາເຣື່ອງເພື່ອຟັງຄວາມເປັນທັມ

### 1. ວິທີດຳເນີນການພິຈາຣະນາເຣື່ອງ

ຖ້າຫາກວ່າທ່ານກຳລັງຖືກທ້າທາຍການຫຼຸດຈຳນວນຊົ່ວໂມງຫຼືການຕັດການບໍລິການ, ທ່ານຈຳເປັນຕ້ອງຂໍການພິຈາຣະນາເຣື່ອງເພື່ອຄວາມເປັນທັມ **ພາຍໃນ 10 ວັນ** ຫຼັງຈາກວັນອອກໃບແຈ້ງການຫຼຸດຊົ່ວໂມງ, ຫຼືກ່ອນເວລາທີ່ການຫຼຸດນັ້ນມີຜົນບັງຄັບ, ເພື່ອຈະໄດ້ຮັບຊົ່ວໂມງທັງໝົດຂອງທ່ານຕໍ່ໄປຄືເກົ່າ ຈົນເຖິງການພິຈາຣະນາເຣື່ອງໄດ້ສຳເຣັດແລ້ວ.

---

[2] ການປະເມີນທີ່ຖືກຕ້ອງໄດ້ຊີ້ຂາດການບໍລິການທີ່ໄດ້ຮັບຈາກທາງອື່ນ ເຊັ່ນການຊ່ວຍເຫຼືອໃນການຖ່າຍເບົາຖ່າຍໜັກທີ່ໄດ້ຮັບຈາກໂຄງການດູແລກາງເວັນ. ເພື່ອຕັດສິນວ່າຄົນໃດຄົນນຶ່ງມີສິດທີ່ຖືກຖືວ່າມີອາການຂາດຄວາມສາມາດຢ່າງຮ້າຍແຮງໄດ້ຫຼືບໍ່, ຕ້ອງນັບຈຳນວນຊົ່ວໂມງທັງສອງ ທີ່ທາງການບໍລິການໂຄງການ IHSS ໄດ້ຈ່າຍແລະຈຳນວນຊົ່ວໂມງທີ່ໂຄງການບໍລິການ IHSS ບໍ່ໄດ້ຈ່າຍ.

ຖ້າຫາກວ່າທ່ານເຊື່ອວ່າຈຳນວນຊົ່ວໂມງທີ່ອະນຸມັດນັ້ນບໍ່ພຽງພໍ, ທ່ານສາມາດທ້າທາຍຄຳຕັດສິນຂອງກົ່ງຣັຖເມື່ອໃດກໍໄດ້. ຢ່າງໃດກໍດີ, ເຈົ້າໜ້າທີ່ການພິຈາຣະນາເຣື່ອງອາດຕື່ມຈຳນວນຊົ່ວໂມງໃຫ້ທ່ານເຖິງຮອດສອງສມາເດືອນຫຼັງວັນທີ່ທ່ານຮ້ອງຂໍການ ພິຈາຣະນາ ເຣື່ອງເທົ່ານັ້ນ. ຖ້າທ່ານຮ້ອງຂໍເພື່ອຟັງພິຈາຣະນາເຣື່ອງໃນເດືອນເມສາ ວັນທີ 15, ເຈົ້າໜ້າທີ່ພິຈາຣະນາເຣື່ອງສາມາດກັບຄືນໄປເລີ້ມຈາກເດືອນ ມົກະຣາ ວັນທີ 1 ມາ. (ທ່ານມີສິທຢູ່ສເມີທີ່ຈະຂໍຄົນເຮັດວຽກຂອງທ່ານໃຫ້ປະເມີນທ່ານອີກເພື່ອເຫັນຮູ້ວ່າເພິ່ນຈະຕົກລົງວ່າທ່ານຕ້ອງການ ຊົ່ວໂມງເພີ້ມຕື່ມຫຼືບໍ່. ຖ້າພະນັກງານຂອງທ່ານເຫັນພ້ອມ, ແລ້ວທ່ານບໍ່ຕ້ອງໄປຂຶ້ນສານຟັງຄວາມເປັນທັມພິຈາຣະນາເຣື່ອງ.)

ເພື່ອຂໍຟັງຄວາມເປັນທັມ:

a. ໃຫ້ຂຽນປະກອບຊັ້ນຫຼັງຂອງແບບຟອມແຈ້ງການກະທຳແລະສົ່ງໄປຍັງທີ່ຢູ່ທີ່ບົ່ງໃສ່, ຫຼື

b. ສົ່ງຈົດໝາຍໄປຍັງ:

IHSS Fair Hearing
State Hearings Division
Department of Social Services
744 P Street, Mail Stop 37-19
Sacramento, CA 95814

ໃຫ້ບອກຊື່ແລະເລກປະຈຳຕົວແລະບອກວ່າທ່ານຕ້ອງການການພິຈາຣະນາເຣື່ອງເພື່ອຟັງຄວາມເປັນທັມເພາະນ່ານບໍ່ເຊື່ອວ່າທ່ານໄດ້ຮັບ ອະນຸມັດຈຳນວນຊົ່ວໂມງທີ່ທ່ານຕ້ອງການ. ຖ້າຫາກວ່າທ່ານຕ້ອງການໃຫ້ມີການພິຈາຣະນາເຣື່ອງຢູ່ໃນເຮືອນຂອງທ່ານ, ໃຫ້ບອກແນວ ນັ້ນໃນໃບຄຳຮ້ອງຂໍຂອງທ່ານ. ຖ້າທ່ານຕ້ອງການນາຍພາສາຫຼືທ່ານຕ້ອງການນາຍພາສາສຳລັບຄົນອື່ນທີ່ຈະໃຫ້ການ (ເຊັ່ນພະນັກງານ ໂຄງການບໍຣິການ IHSS ຂອງທ່ານ), ໃຫ້ຮ່ອນຂໍ້ນັ້ນໃນຄຳຮ້ອງຂອງທ່ານອີກດ້ວຍ.

ທ່ານຈະສາມາດສົ່ງຈົດໝາຍໄປທາງແຟັກຊ໌ໄດ້ອີກດ້ວຍທີ່ 916-229-4110.

ຫລື

c. ໃຫ້ໂທຣະສັບຫາເລກໂທຣ໌ຟຣີ 800-743-8525 ເພື່ອຂໍການພິຈາຣະນາເຣື່ອງຟັງຄວາມເປັນທັມ.

## 2. ຄວາມຮູ້ທີ່ທ່ານຕ້ອງການເພື່ອເລີ້ມຕົ້ນ

ໃຫ້ເກັບກຳຄວາມຮູ້ກ່ຽວກັບວິທີທີ່ພະນັກງານກົ່ງຣັຖໄດ້ໃຊ້ເພື່ອຕັດສິນຈຳນວນຊົ່ວໂມງທີ່ອະນຸມັດໃຫ້ທ່ານ.

a. ໃຫ້ຂໍສຳເນົາແບບແຟອມການປະເມີນອັນລ້າສຸດກັບພະນັກງານຂອງທ່ານ. ແບບຟອມເຫຼົ່ານີ້ຂອງກົ່ງຣັຖຈະປະກອບດ້ວຍໃບ ຄຳນວນກ່ຽວກັບຊົ່ວໂມງວ່າເປັນດ້ວຍເຫດໃດຈຶ່ງໄດ້ຖືກອະນຸມັດແລະບໍ່ໄດ້ຮັບອະນຸມັດ. ພ້ອມດຽວກັນກໍໃຫ້ຂໍສຳເນົາແບບ ຟອມ SOC 293 ອັນລ້າສຸດ. ແບບຟອມ SOC 293 ລວມທັງຂໍ້ມູນການລຽງລຳດັບຂອງໜ້າທີ່ກ່ຽວກັບວ່າທ່ານຈະ ສາມາດແລະບໍ່ສາມາດເຮັດວຽກອັນໃດໄດ້ແດ່. ຖ້າທ່ານກຳລັງທ້າທາຍກັບການຫຼຸດຊົ່ວໂມງ, ໃຫ້ຂໍສຳເນົາຂອງແບບຟອມ ການປະເມີນ SOC 293 ໃບໃໝ່ແລະໃບເກົ່າທັງສອງຢ່າງຈາກກົ່ງຣັຖ.

b. ໃຫ້ຂໍສຳເນົາຂອງໜັງສືທີ່ຢູ່ໃນແຟ້ມຂອງທ່ານຊຶ່ງມີການບັນທຶກກ່ຽວກັບເວລາທີ່ມີການຕິດຕໍ່ແລະການພົບກັນກັບທ່ານພາຍໃນປີທີ່ ຜ່ານມານີ້.

c. ໃຫ້ຂໍສຳເນົາຂອງຄຳແນະນຳຈຳນວນເວລາທີ່ໃຊ້ເພື່ອເຮັດວຽກຂອງກົ່ງຣັຖຈາກພະນັກງານຂອງທ່ານ. ໃຫ້ຈຳໄວ້ວ່າ, ຈະໃຊ້ຄຳແນະນຳ ເວລາທີ່ໃຊ້ເພື່ອເຮັດວຽກບໍ່ໄດ້ສຳລັບການຮັກສາດູແລສ່ວນຕົວ.

d. ໃຫ້ຂໍເອົາສຳເນົາລາຍງານຂອງທ່ານໝໍຫຼືທາງພະຍາບານທີ່ມີຢູ່ໃນແຟ້ມຂອງທ່ານແລະສຳເນົາຂອງແບບຟອມດ້ານພະຍາບານໃບໃດນຶ່ງຈາກພະນັກງານຂອງ ທ່ານ.

❖❖❖

*ໝາຍເຫດ:* ກົດໝາຍວ່າດ້ວຍການສະຫວັດດີການ & ສະຖາບັນ ກົດ § 10850(c) ອະນຸຍາດໃຫ້ຫ້ອງການບໍລິການສັງຄົມ (DSS) ວາງກົດລະບຽບອອກມາຍ້ອນຄວາມຫ່ວງໄຍໃນການເຂົ້າເຖິງແຟ້ມຂອງເລື່ອງ, ປະກອບດ້ວຍການເຂົ້າເຖິງແຟ້ມຂອງເລື່ອງໂດຍຜູ້ສະໝັກຂໍແລະຜູ້ທີ່ໄດ້ຮັບ. ກົດລະບຽບຂອງຫ້ອງການບໍລິການສັງຄົມ (DSS) ໄດ້ມີຢູ່ໃນປື້ມຄູ່ມືວ່າດ້ວຍນະໂຍບາຍແລະກົດລະບຽບຕ່າງໆ. ກົດລະບຽບເຫຼົ່ານີ້ມີ ຢູ່ໃນ ສ່ວນ (Division 19 ຖການຮັກສາເປັນຄວາມລັບ) ແລະ 22 (ການຟັງຄວາມເປັນທັນຂອງຣັຖ) ຯລະໄດ້ມີໃຫ້ຈາກ ອິນເທີແນັດ ທີ່ www.dss.cahwnet.gov/ord/CDSSManual_240.htm. ກົດລະບຽບເຫຼົ່ານີ້ຈະໃຊ້ກາບເນື່ອເວລາການບໍລິການທີ່ທ່ານໄດ້ຮັບ ຫຼືຊອກຫາໄດ້ຖືກຄຸ້ມຄອງພາຍໃຕ້ໂຄງການດູແລຮັກສາສ່ວນບາຄົນຂອງປະກັນພັຍ Medi-Cal. ກົດໝາຍວ່າດ້ວຍການສະຫວັດດີການ & ສະຖາບັນ ກົດ § 14100.2; ກົດລະບຽບວ່າດ້ວຍກົດຂອງຣັຖ Cal. Code Regs., tit. 22 § 50111. ກົດລະບຽບວ່າດ້ວຍການ ເຂົ້າ ເຖິງຂອງຣັຖປຸດຣະງັບກົດລະບຽບທີ່ຈຳກັດຂອງກົ່ງຣັຖມັນອີກ. ກົດໝາຍວ່າດ້ວຍການສະຫວັດດີການ & ສະຖາບັນ ກົດ §§ 10850(c) ຖແຊ ແລະ 14100.2(f). ຖ້າຫາກວ່າທ່ານໄດ້ແລ່ນເຂົ້າບັນຫາເລື່ອງການເຂົ້າເຖິງແຟ້ມເລື່ອງຂອງທ່ານ, ໃຫ້ໂທຣ໌ຫາການປ້ອງກັນ & ທີ່ປຶກສາທາງກົດໝາຍ (Protection & Advocacy).

ປື້ມຄູ່ມືວ່າດ້ວຍນະໂຍບາຍແລະກົດລະບຽບຕ່າງໆຂອງຫ້ອງການບໍລິການສັງຄົມ (DSS) § 19-005.1 ເວົ້າວ່າຜູ້ທີ່ໄດ້ຮັບ ຫຼືຜູ້ສະໝັກຂໍ, ຫຼືຜູ້ ເປັນຕົວແທນທີ່ໄດ້ລັບອະນຸມັດຂອງຕົນ, ອາດທົບທວນແຟ້ມເລື່ອງ "ທີ່ໄດ້ບັນທຶກໄວ້ແລະເກັບຮັກສາໂດຍທາງພະແນກສະຫວັດດີການຂອງກົ່ງຣັຖໃນການຜູກພັນກັບການປົກຄອງຂອງໂຄງການການຊ່ວຍເຫຼືອຂອງຣັຖະບາລ." ທ່ານສາມາດທົບທວນການບັນທຶກທາງການແພທຢູ່ໃນແຟ້ມຂອງທ່ານ. ປື້ມຄູ່ມືວ່າດ້ວກົດລະບຽບຂອງຫ້ອງການບໍລິການສັງຄົມ (DSS) ເລກທີ § 19-006. ມີບັນທຶກອັນດຽວເທົ່ານັ້ນທີ່ທ່ານບໍ່ສາມາດເບິ່ງໄດ້ອັນໄດ້ແກ່ສິ່ງທີ່ຖືກຄຸ້ມຄອງໂດຍ ສະເພາະ "ສິທພິເສດ" ເຊັ່ນວ່າທະນາຍຄວາມ–ສິທພິເສດລູກຄ້າຊຶ່ງມັນບໍ່ຂຶ້ນກັບທ່ານ. ປື້ມຄູ່ມື ຫ້ອງການບໍລິການສັງຄົມ (DSS) ວ່າດ້ວຍກົດລະບຽບ § 19-006. ພ້ອມດຽວກັນ, ໃຫ້ເບິ່ງຕາມ, ກົດລະບຽບວ່າດ້ວຍການຟັງຄວາມເປັນທັນຂອງຣັຖທ່ີປື້ມຄູ່ມືວ່າດ້ວຍກົດລະບຽບການບໍລິການສັງຄົມ DSS Manual § 22-051. ພະແນກການຊ່ວຍເຫຼືອສະຫວັດດີການ ຂອງກົ່ງຣັຖຈະຕ້ອງຈັດສຳເນົາເຮັດໄກປີໃຫ້ທ່ານ ທຸກໆຮູບຮ່າງ, ເອກະສານນະໂຍບາຍຕ່າງໆ, ຫຼືກົດລະບຽບທີ່ຕ້ອງການໃນການກະຕຽມເພື່ອ ການພິຈາຣະນາເລື່ອງຟັງຄວາມເປັນທັນ. ປື້ມຄູ່ມືວ່າດ້ວຍກົດລະບຽບການບໍລິການສັງຄົມ DSS Manual § 22-051.3.

❖❖❖

e. ຖ້າວ່າການບໍລິການໂຄງການ ຮ;; ໄດ້ຫຼຸດຊົ່ວໂມງຂອງທ່ານລົງ, ໃຫ້ຖາມກັບພະນັກງານຫ້ອງການປົກການໂຄງການ IHSS ຂອງທ່ານເພື່ອຂໍເອົາເອກະສານອັດສຳເນົາພິມຂອງກົດລະບຽບທີ່ມີລາຍຊື່ໃນແຈ້ງການຫຼຸດຊົ່ວໂມງຂອງທ່ານລົງ.

f. ກົດລະບຽບຂອງການບໍລິການໂຄງການ IHSS ມີຢູ່ໃນປື້ມຄູ່ມືວ່າດ້ວຍນະໂຍບາຍແລະກົດລະບຽບຂອງຫ້ອງການບໍລິການສັງຄົມ. ຖ້າທ່ານໄດ້ເຂົ້າຫາທາງອິນເທີແນັດໄດ້, ທ່ານສາມາດຊອກເຫັນກົດລະບຽບຂອງຫ້ອງການບໍລິການສັງຄົມທີ່ www.dss.cahwnet.gov/ord/CDSSManual_240.htm. ໄດ້ມີສີ່ທາງເຂົ້າໄປເບິ່ງກົດລະບຽບ Division 30. ໃຫ້ໂດດຂ້າມທາງເຂົ້າທີ່ນຶ່ງ. ກົດລະບຽບຂອງການບໍລິການໂຄງການ IHSS ເລີ້ມປະມານ 5 ໜ້າໃນການໃຊ້ທາງເຂົ້າອັນທີສອງ, ໃຫ້ສືບຕໍ່ໄປເຖິງທາງເຂົ້າອັນທີສາມ, ແລະສິ້ນສຸດຈາກທາງເຂົ້າອັນທີສີ່. ທ່ານຍັງສາມາດໄດ້ລັບຈົດໝາຍຂອງກົ່ງຣັຖ–ທັງໝົດ (All-County) ທີ່ www.dss.cahwnet.gov/lettersnotices/AllCountyL_542.htm. ຈົດໝາຍຂອງກົ່ງຣັຖ–ທັງໝົດໄດ້ຖືກຊີ້ນຳໃຫ້ຫ້ອງການບໍລິການສັງຄົມຂອງຣັຖສົ່ງໄປຫາກົ່ງຣັຖທັງໝົດ. ຈົດໝາຍໄດ້ກວມເອົາໂຄງການຫຼາຍໆຢ່າງ; ມີຈົດໝາຍເລັກນ້ອຍເທົ່ານັ້ນທີ່ເວົ້າກ່ຽວກັບການບໍລິການໂຄງການ IHSS.

## 3. ພະນັກງານກົງຣັຖວ່າດ້ວຍສານການອຸທອນ

ຫຼັງຈາກທ່ານໄດ້ຍື່ນຄຳອຸທອນ, ທ່ານຈະໄດ້ຮັບລາຍລະອຽດຈາກຣັຖກ່ຽວກັບສິທທິຂອງທ່ານໃນການຂໍອຸທອນຈາກສານແລະຈະບອກທີ່ຢູ່ແລະເລກໂທຣະສັບຂອງພະນັກງານກົງຣັຖວ່າດ້ວຍສານການອຸທອນ, ຜູ້ທີ່ຈະເປັນຕົວແທນຂອງກົງຣັຖຢູ່ທີ່ສານອຸທອນພິຈາຣະນາເຣື່ອງ. ແຟ້ມການບໍຣິການໂຄງການ IHSS ຂອງທ່ານກໍຢູ່ໃນສຳນັກງານນັ້ນ. ມີພະນັກງານສານການອຸທອນຫຼາຍຄົນທີ່ພະຍາຍາມແກ້ໄຂການຂັດແຍ່ງກັນໂດຍບໍ່ມີການພິຈາຣະນາເຣື່ອງເພື່ອຟັງຄວາມເປັນທັມ. ພະນັກງານສານການອຸທອນນັ້ນມີປະສົບປະການແລະຄວາມຮູ້ຫຼາຍກວ່າຄົນອື່ນທີ່ທ່ານເຄີຍຕິດຕໍ່ນຳໃນສຳນັກງານທ້ອງຖິ່ນ. ພະນັກງານສານການອຸທອນໂທຣ໌ຫາທ່ານກ່ຽວກັບການ "ຖອນຄຳຮ້ອງໂດຍມີເງື່ອນໄຂ" ("conditional withdrawal") ເພື່ອຈະເຮັດການປະເມີນໃໝ່ໄດ້. ຖ້າທ່ານຕົກລົງວ່າຈະຖອນຄຳຮ້ອງຂໍອຸທອນສານຂອງທ່ານໂດຍມີເງື່ອນໄຂ, ທ່ານມີສິທໃຫ້ນັດໝາຍການພິຈາຣະນາເຣື່ອງເພື່ອຟັງຄວາມເປັນທັມໃໝ່ ຖ້າທ່ານເຫັນພ້ອມກັບການປະເມີນໃໝ່ຫຼືຄຳຕັດສິນວ່າຈະບໍ່ອະນຸມັດຜົນປະໂຫຍດໃນເບື້ອງຫຼັງ.

## 4. ຄຳຊີ້ແຈ່ງເຣື່ອງຂອງກົງຣັຖກ່ຽວເຣື່ອງທ່າທີບົດບາດ

ທ່ານມີສິທໄດ້ຮັບຄຳຊີ້ແຈ່ງຣື່ອງຂອງກົງຣັຖພາຍໃນສອງວັນກ່ອນວັນຂຶ້ນສານພິຈາຣະນາເຣື່ອງຂໍຟັງຄວາມເປັນທັມ. ຖ້າວ່າການຟັງຄວາມເປັນທັມມີຂຶ້ນໃນວັນສກ, ທ່ານມີສິທໄດ້ລັບຄຳຊີ້ແຈ່ງກ່ຽວເຣື່ອງທ່າທີບົດບາດໃນຕອນເຊົ້າຂອງວັນພຫ. (ທ່ານມີສິທທີ່ຈະເບິ່ງແຟ້ມຂອງທ່ານເມື່ອໃດກໍໄດ້ບໍ່ວ່າທ່ານກຳລັງລໍຖ້າການພິຈາຣະນາເຣື່ອງຂໍຟັງຄວາມເປັນທັມຫຼືບໍ່ກໍຕາມ. ໃຫ້ເບິ່ງຈົດບັນທຶກຂ້າງເທິງພາຍໃຕ້ວັກຕອນທີ 2).

ຄຳຊີ້ແຈ່ງເຣື່ອງຂອງກົງຣັຖຈະຊ່ວຍທ່ານ ໃຫ້ຮູ້ເຫັນຫຼັກຖານຢ່າງອື່ນແລະພະຍານຄົນອື່ນທີ່ທ່ານອາດຕ້ອງການໃຊ້. ຖ້າຫາກວ່າທ່ານບໍ່ໄດ້ຮັບສຳເນົາຈົນເຖິງການພິຈາຣະນາເຣື່ອງພໍດີ, ທ່ານສາມາດຂໍໃຫ້ລາຍການບັນທຶກເປີດໄວ້ຕລອດເພື່ອຍື່ນຫຼັຖານຕື່ມອີກໄດ້ (ເຊັ່ນວ່າຈົດໝາຍຫຼືຄຳໃຫ້ການ) ເພື່ອຕອບຄຳໃຫ້ການຂໍ້ໃດນຶ່ງໃນຄຳຊີ້ແຈ່ງຂອງກົງຣັຖ. ເຖິງແມ່ນຖ້າວ່າທ່ານໄດ້ຮັບຄຳຊີ້ແຈ່ງເຣື່ອງຂອງກົງຣັຖທ່ອງທັນກັບເວລາ, ທ່ານຍັງສາມາດຂໍໃຫ້ເປີດລາຍການບັນທຶກເຣື່ອງຄະດີຄວາມເປັນທັມໄວ້ໄດ້ເພື່ອວ່າທ່ານຈະສາມາດຍື່ນຫຼັກຖານເພີ້ມຕື່ມໄດ້.

## 5. ຢູ່ທີ່ຫ້ອງການສານອຸທອນພິຈາຣະນາເຣື່ອງ

ທາງກົງຣັຖໄດ້ດຳເນີນກ່ອນແລະໄດ້ບອກແຈ້ງສາຍເຫດທີ່ໄດ້ຕັດຊົ່ວໂມງຂອງທ່ານຫຼືເພາະດ້ວຍເຫດໃດທ່ານຈຶ່ງບໍ່ສົມຄວນໄດ້ຮັບຊົ່ວໂມງເພີ້ມຕື່ມທີ່ທ່ານເຊື່ອວ່າຕ້ອງການ.

ການພິຈາຣະນາເຣື່ອງມີການຍື່ນຫຼັກຖານ (ຄຳໃຫ້ການຈາກພະຍານ, ຈົດໝາຍ, ລາຍງານທາງການແພທ) ທີ່ກ່ຽວຂ້ອງກັບຄວາມຕ້ອງການຂອງທ່ານໃນດ້ານການບໍຣິການທີ່ທ່ານແລະທາງກົງຣັຖບໍ່ເຫັນດີເຫັນພ້ອມກັນ. ຫຼັກຖານຄວນສະແດງຄວາມຕ້ອງການຂອງທ່ານ, ຈຳນວນເວລາທີ່ຕ້ອງໃຊ້ເພື່ອບໍຣິການ, ສາຍເຫດທີ່ຈະນຳໃຫ້ຮູ້ຈັກວ່າທ່ານຕ້ອງມີເວລາຫຼາຍກວ່າຈຳນວນທີ່ບົ່ງໄວ້ໃນໃບປະເມີນ ຫຼືໃບຄຳແນະນຳຂອງທາງກົງຣັຖ, ແລະຈະມີການສ່ຽງແນວໃດ ຖ້າທ່ານບໍ່ໄດ້ຮັບການບໍຣິການຕາມລະດັບທີ່ທ່ານຮ້ອງຂໍ. ການພິຈາຣະນາເຣື່ອງເພື່ອຄວາມເປັນທັມ ການບໍຣິການໂຄງການ IHSS ບໍ່ມີພິທີ. ສິ່ງທີ່ສຳຄັນກໍຄືໃຫ້ອະທິບາຍວ່າເປັນດ້ວຍເຫດໃດໃດທ່ານຈຶ່ງຕ້ອງການເວລາເພີ້ມຕື່ມ.
ຫຼັກຖານສຳຄັນທີ່ສຸດແມ່ນໄດ້ຈາກບຸກຄົນທີ່ໃຫ້ການຮັກສາດູແລທ່ານແລະຜູ້ຊຶ່ງເປັນຄົນເກັບກຳບັນທຶກປະຈຳວັນກ່ຽວກັບຈຳນວນຊົ່ວໂມງເວລາທີ່ໄດ້ໃຊ້ນັ້ນ.

ພວກພະຍານອາດປະກອບດ້ວຍ – ຮວມທັງຜູ້ໄດ້ຮັບບໍຣິການໂຄງການ IHSS – ຜູ້ໃຫ້ການບໍຣິການ ໂຄງການ IHSS ທັງຜູ້ເກົ່າແລະຜູ້ປະຈຸບັນ, ຜູ້ຜຶກສາປະຈຳສູນກາງເຂດ, ໝູ່ແລະຄອບຄົວ, ແລະອື່ນໆອີກດ້ວຍ. ສຳລັບພະຍານແຕ່ລະຄົນ, ໃຫ້ບັນທຶກຫົວຂໍ້ທີ່ທ່ານຢາກໃຫ້ພະຍານອ້າງເຖິງນັ້ນແລ້ວຂີດຂໍ້ນັ້ນອອກ ເມື່ອໄດ້ອ້າງເຖິງແລ້ວ.

ສຳລັບຄວາມຮູ້ເພີ້ມເຕີມກ່ຽວກັບວິທີດຳເນີນການພິຈາຣະນາເຣື້ອງເພື່ອຄວາມເປັນທັມ, ໃຫ້ເຂົ້າຢ້ຽມແວັບໄຊຂອງພະແນກສານອຸທອນເພື່ອຄວາມເປັນທັ້ມຂອງຣັຖ (State Hearings Division) ທີ່ www.dss.cahwnet.gov/shd/default.htm

## 6. ການຫາຄວາມຊ່ວຍເຫຼືອເພື່ອການພິຈາຣະນາເຣື່ອງ

ເພື່ອຄວາມຊ່ວຍເຫຼືອເພີ້ມຕື່ມ, ໃຫ້ໂທຣະສັບຫາສມາຄົມເຂດ (ຖ້າຜູ້ໄດ້ຮັບການບໍຣິການໂຄງການ IHSS ເປັນລູກຄ້າ), ສູນກາງເຄຫາສະຖານເອກະຣາດ, ໂຄງການຊ່ວຍເຫຼືອທາງກົດໝາຍ, ໂຄ້ງການຊ່ວຍສູ້ເພື່ອສິທ, ເລກໂທຣ໌ຟຣີຂອງອົງການ PAI (800) 776-5746, ຫຼືສມາຄົມກົດໝາຍພາກຕາວັນຕົກເພື່ອສິທທິຄົນພິການ Western Law Center for Disability Rights (213) 736-1031. ເພື່ອຄົ້ນຄ້ວາເອົາເລກໂທຣະສັບຂອງໂຄງການຊ່ວຍສູ້ເພື່ອສິທຂອງພວກອາວຸໂສໃນເຂດຂອງທ່ານ, ໃຫ້ໂທຣ໌ຫາສຳນັກງານສູງອາຍຸໃນກົງຣັຖຂອງທ່ານ ຫຼືທີ່ຫ້ອງການສູງອາຍຸຂອງຣັຖ ຫju (800) 510-2020.

ຖ້າທາງກົງຣັຖກຳລັງຊອກທາງຫຼຸດຊົ່ວໂມງຂອງທ່ານລົງຫຼືລົບລ້າງການບໍຣິການ (ເຊັ່ນວ່າການຄວບຄຸມການປ້ອງກັນ), ທາງກົງຣັຖຕ້ອງຮັບພາລະໜັກໃນການສະແດງວ່າທ່ານໄດ້ມີອາການດີຂຶ້ນຫຼືມີການປ່ຽນແປງໃນສະພາບການຢູ່ກິນຂອງທ່ານ ໄດ້ສະແດງວ່າທ່ານຕ້ອງການຊົ່ວໂມງນ້ອຍກວ່າ – ໂທຣ໌ຫາ PAI ເພື່ອເອົາສຳເນົາຂອງໜັງສືທີ່ອະທິບາຍພາລະໜັກໜ່ວງຂອງກົງຣັຖ.

# II. ຂໍ້ມູນຫຼືສາຍເຫດທີ່ສະແດງວ່າ :ປັນຫາຼງທ່ານຈຶ່ງຕ້ອງການຊົ່ວໂມງການບໍຣິການໂຄງການ IHSS ເພີ້ມຕື່ມ

**1. ການບໍຣິການທຳຄວາມສະອາດເຮືອນ** (ໃຫ້ເບິ່ງຕາມໜ້າ 1 ຂອງໃບຄຳນວນວັກ IV)

ທັມມະດາ ກົດຣະບຽບຂອງຣັຖອະນຸມັດໃຫ້ແຕ່ 6 ຊົ່ວໂມງຕໍ່ເດືອນ **ຕໍ່ຄົວເຮືອນນຶ່ງ** ສຳລັບການບໍຣິການທຳຄວາມສະອາດເຮືອນ. ເມື່ອກົດຣະບຽບໄດ້ມີການອະນຸມັດອອກໃຊ້, ຣັຖໄດ້ອະທິບາຍວ່າການອະນຍາດໃຫ້ 6 ຊົ່ວໂມງຕໍ່ເດືອນແມ່ນຂຶ້ນຢູ່ກັບການໄດ້ລັບການບໍຣິການທຳຄວາມສະອາດເຮືອນສອງເທື່ອຕໍ່ເດືອນ.

ນີ້ໝາຍຄວາມງ່າ ຖ້າມີ 4 ຄົນອາສັຍຢູ່ໃນເຮືອນ, ຈຳນວນຊົ່ວໂມງການບໍຣິການໂຄງການ IHSS ທັງໝົດທີ່ຈະອະນຸມັດໃຫ້ແກ່ຜູ້ໄດ້ຮັບແມ່ນ 1.5 ຊົ່ວໂມງຕໍ່ເດືອນ. (ຖ້າເພື່ອນຮ່ວມຫ້ອງຂອງຜູ້ໄດ້ຮັບອາສັຍເປັນພຽງແຕ່ຜູ້ຊ່ວຍທີ່ຂໍພັກຫ້ອງຊື່ໆ, ບໍ່ຄວນໃຊ້ອັດຕາສ່ວນສຳລັບການບໍຣິການທຳຄວາມສະອາດເຮືອນ). ທາງກົງຣັຖຄວນໃຊ້ອັດຕາສ່ວນສຳລັບແຕ່ເຂດເຮືອນສ່ວນຮວມເທົ່ານັ້ນ – ຫ້ອງນອນແລະ/ຫ້ອງນໍ້າຂອງຜູ້ພິການຄວນໄດ້ຮັບການອະນຸມັດຕ່າງຫາກ. ຖ້າຜູ້ພິການຕ້ອງການເວລາຕື່ມເພື່ອບໍຣິການທຳຄວາມສະອາດເຮືອນ ເພື່ອສາມາດອາສັຍຢູ່ເຮືອນໄດ້ຢ່າງປອດພັຍ, ທາງກົງຣັຖຄວນອະນຸມັດການຍົກເວັ້ນໃຫ້ຊົ່ວໂມງສູງເຖິງ 6 ຊົ່ວໂມງຕໍ່ເດືອນຕາມຄຳແນະນຳຊົ່ວໂມງທີ່ໃຊ້ເຮັດການ. ຕົວຢ່າງ:

a. ບັນຫາກ່ຽວກັບອາການພູມແພ້ຫຼືການຫາຍໃຈສະແດງຄວາມຕ້ອງການໃຫ້ມີເຂດແວດລ້ອມທີ່ປາສະຈາກຂີ້ຝຸ່ນແລະຄວາມຕ້ອງການໃຫ້ເຊັດຖູເຮືອນແລະດູດພົມພື້ນເລື້ອຍໆ.

b. ຕ້ອງເອົາຂີ້ເຫຍື້ອໄປຖິ້ມທຸກວັນ, ຫຼືຫຼາຍກວ່າສອງເທື່ອຕໍ່ເດືອນ, ຍ້ອນບັນຫາກ່ຽວກັບແມງສາບຫຼືບັນດາສັດຈັງໄຮຢ່າງອື່ນ.

c. ຍ້ອນຜູ້ໄດ້ຮັບການບໍຣິການໂຄງການ IHSS ເຮັດສິ່ງຂອງຂວ້ຳ, ຕ້ອງທຳຄວາມສະອາດເລື້ອຍໆ, ໂດຍສະເພາະເມື່ອມີບັນຫາກັບແມງສາບຫຼືສັດຈັງໄຮອື່ນໆ.

d. ອາການທີ່ກັ້ນໄວ້ບໍ່ຢູ່ (ຂີ້, ຍ່ຽວ, ຮາກໄຫຼ) ເຮັດໃຫ້ມີຄວາມຕ້ອງການລ້າງພື້ນ, ເຄື່ອງເຮືອນແຕ່ລະບ່ອນ, ເປັນຕົ້ນ, ຢູ່ເລື້ອຍໆ.

e. ຕ້ອງໄດ້ຜ່ານສອງປະຕູທີ່ລອັກກອນຢູ່ທີ່ຫຼັງຕຶກເພື່ອເອົາຂີ້ເຫຍື່ອໄປຖິ້ມໃສ່ກະຖັງຖິ້ມຂີ້ເຫຍື່ອແລະຕ້ອງໃຊ້ເວລາ ຢ໒ ນາທີເພື່ອກັບມາ.

f. ຜູ້ເປັນພິການໄດ້ກິນອາຫານຢູ່ເທິ່ງບ່ອນນອນ. ຕ້ອງດູດແລະແປງບ່ອນນອນສາມເທື່ອຕໍ່ອັນເພື່ອເກັບເສດອາຫານ. ຕ້ອງປ່ຽນຜ້າປູບ່ອນ ຫຼາຍກວ່າທັມມະດາຍ້ອນມີເຄື່ອງເປື້ອນຕົກເຫຼັ່ງໃສ່.

g. ຍ້ອນວ່າອາການກັ້ນໄວ້ບໍ່ຢູ່/ອຸບັດເຫດຂອງຜູ້ປ່ວຍ, ຕ້ອງປ່ຽນຜ້າປູນອນຫຼາຍກວ່າສອງເທື່ອຕໍ່ເດືອນ (ທຸກວັນ, ສາມເທື່ອຕໍ່ອາທິດ, ອາທິດລະເທື່ອ, ແລະຕໍ່ໆໄປ).

h. ຍ້ອນວ່າເນື້ອໜັງຂອງຜູ້ປ່ວຍອ່ອນເກີນໄປອັນເປັນການສ່ຽງຕໍ່ການເຈັບປວດເທິງຕຽງຫຼືອາການເປັນໂຣຄກົ້ນເປັນໜໍ່ (decubiti), ຜ້າປູບ່ອນນອນຕ້ອງຮັກສາໃຫ້ພົ້ນນອນເພື່ອຫຼີກເວັ້ນການຂະຍາຍຕົວຂອງເມັດຮອຍຮ້ອນ; ຕ້ອງການໃຫ້ຮັບປະກັນວ່າຢູ່ໃນຕຽງນອນທີ່ຈະ ຂູດຫຼືຄັນຄາຍຕາມຜິວໜັງ.

i. ຍ້ອນຜູ້ໄດ້ຮັບການບໍຣິການໂຄງການ IHSS ໄດ້ເຮັດສິ່ງຂອງຕົກເຫຼັ່ງ, ຕ້ອງໄດ້ໃຊ້ເວລາຕື່ມເພື່ອເກັບຂອງນັ້ນຄືນໄວ້.

j. ຍ້ອນຂອບຢາງຂອງປະຕູຕູ້ເຢັນເສັຽແລ້ວ, ຕ້ອງໃຊ້ເວລາຕື່ມເພື່ອລ້າງແລະເຮັດໃຫ້ນ້ຳແຂງລະລາຍໃນຕູ້ເຢັນ.

k. ຍ້ອນຜູ້ໄດ້ຮັບບໍຣິການໂຄງການ IHSS ນອນເທິງຕຽງນອນຫຼາຍໂພດຫຼືຍ້ອນຕົນຕົວອອກເຫື່ອ, ຕ້ອງປ່ຽນຜ້າປູນອນເລື້ອຍໆກວ່າສອງ ເທື່ອຕໍ່ເດືອນ.

l. ການພົ່ນຢາຂ້າແມງສາບທີ່ອຶດກຳນົດວ່າ, ຕາມພື້ນຖານແຕ່ລະເທື່ອ, ຕ້ອງຍ້າຍທຸກສິ່ງອອກຈາກຫ້ອງຄົວແລະລ້າງຊັ້ນແລະ, ຫຼັງຈາກການພົ່ນນັ້ນ, ຂົນເອົາເຄື່ອງນຸ້ງນຄືນ. (ຕ້ອງໃຊ້ເວລາສຳລັບການເຮັດນີ້ບໍ່ໃສ່ວ່າແຕ່ເພື່ອສຂະພາບແລະຄວາທປອດພັຍເທົ່ານັ້ນ, ແຕ່ເປັນເພື່ອຕັ້ງແອລະຮັກສາສະພາບການອາສັຍຢ່າງເອກະຣາດໄດ້ອີກດ້ວຍເພາະການຂາດການປະຕິບັດຕາມກົດຣະບຽບອາດເຮັດໃຫ້ຜູ້ພິການມີການສ່ຽງຕໍ່ການຖືກຂັບໄລ່ໃຫ້ອອກ.)

## 2. ການບໍຣິການຮັກສາສ່ວນຕົວ

ຕ້ອງປະເມີນການບໍຣິການສ່ວນຕົວຕາມຄວາມຕ້ອງການຂອງແຕ່ລະຄົນ. ໃຫ້ແນ່ໃຈວ່ານັບເວລາສຳລັບການເຮັດທັງໝົດ, ຕັ້ງແຕ່ຕົ້ນ ຈົນສິ້ນສຸດ.

a. ຈະເອົາຕັ່ງລໍ້ເຂົ້າຫ້ອງນ້ຳບໍ່ໄດ້, ນີ້ໝາຍຄວາມວ່າຕ້ອງໃຊ້ເວລາຕື່ມເພື່ອອາບນ້ຳແລະຮັກສາຕົວ/ແຕ່ງຕົວແລະອື່ນໆ.

b. ອຸບັດເຫດໃນຫ້ອງນ້ຳເກີດມີຄວາມຈຳເປັນໃນການທຳຄວາມສະອາດຕື່ມອີກໃນການຮັກສາຖ່າຍໜັກຖ່າຍເບົາ.

c. ຜູ້ພິການຮູ້ສຶກມີອາການເຈັບໄວ--ການຫວີຜົມກໍເຈັບຫຼາຍ. ການບໍຣິການສ່ວນຕົວຕ້ອງເຮັດຢ່າງຊັກຊ້າແລະໂດຍຣະມັດຣະວັງ.

d. ຜູ້ພິການກິນແລະຫງ້ຳອາຫານຊ້າໆແລະຕ້ອງຊັກຈູງເຂົາໃຫ້ກິນຫຼືເອົາມືຈັບຄາງກະໄຕຊ່ວຍຫງ້ຳ. ການກິນເຂົ້າແຕ່ລະເທື່ອອາດໃຊ້ເວລານານເຖິງ ຖຸ ຈຶ່ງກິນແລ້ວ.

e. ເຖິງແມ່ນວ່າຜູ້ພິການສາມາດປ້ອນອາຫານໃຫ້ຕົນເອງໄດ້, ຍັງຕ້ອງໃຫ້ມີຜູ້ຊ່ວຍເພື່ອຍົກຂອງໜັກແລະຍ້ອນມີບັນຫາການແຄ້ນຄໍສະນັ໊ກເຂົ້າ.

f. ຕ້ອງອາບນ້ຳຫຼາຍກວ່າສອງເທື່ອຕໍ່ອາທິດຍ້ອນວ່າການເຮັດຂອງຕົກເຫຶ່ງໃສ່, ການຂີ້ໄຫຼຍ່ຽວໄຫຼ, ບັນຫາກັບເນື້ອໜັງ.

g. ເນື້ອໜັງອ່ອນບາງແລະເປັນທີ່ຍອມຮັບກັບຮອຍດ່າງຮ້ອນຊຶ່ງສາມາດທຳໃຫ້ກາຍນອນເຈັບປວດຕົນຕົວຫຼືມີພະຍາດສະດວງກົ້ນໃສ້ລົງທຳເປັນຕົ້ນ, ຕ້ອງການຮັບປະກັນວ່າບໍ່ມີຫຍັງຈະຂູດເກົາຫຼືທຳໃຫ້ເນື້ອໜັງອອກຮ້ອນເຊັ່ນວ່າເຄື່ອງນຸ່ງຫົ່ມ, ຕ້ອງສັບໃຫ້ນັ່ງຂີ່ລໍ້ຢ່າງໃດ, ເປັນຕົ້ນ.

h. ຕ້ອງສະຜົມດ້ວຍແຊມພູຫຼາຍກວ່າອາທິດລະເທື່ອຍ້ອນມີຂີ້ຫົວ, ການເຮັດໃຫ້ອາຫານແລະແນວອື່ນຕິດຕາມເສັ້ນຜົມ.

i. ຕ້ອງໃຊ້ເວລາເພີ້ມຕື່ມເພື່ອຕິດຕໍ່ກັບຜູ້ໃຫ້ການບໍຣິການໂຄງການ IHSS (ເຊັ່ນຄົນເປັນອຳມະພາດເນື່ອງຈາກສະໝອງຖືກບາດເຈັບ ຜູ້ທີ່ຕ້ອງໃຊ້ແປ້ນຄຳສັບແລະຕົວອັກສອນສຳລັບຄົນພິການ).

j. ນັກຖືກລະບົບການຫາຍໃຈອັກເສບງ່າຍ ສະນັ້ນຫຼັງຈາກສະຜົມດ້ວຍແຊມພູແລ້ວຕ້ອງເປົ່າຜົມໃຫ້ແຫ້ງ.

## 3. ການບໍຣິການຕ່າງໆ

a. ຕ້ອງໃຊ້ເວລາຕື່ມເພື່ອປຸງແຕ່ງອາຫານແລະ/ຫຼືຈັດແຜນລາຍການອາຫານຍ້ອນວ່າ:

   i. ຜູ້ພິການຕ້ອງມີແຜນອາຫານພິເສດ, ເຊັ່ນເຄື່ອງອາຫານເຄື່ອງດື່ມທີ່ປາສະຈາກເກືອແລະນ້ຳຕານຫຼືກຳນົດ ໃຫ້ກິນແຕ່ອາຫານສົດໆ;

   ii. ຕ້ອງຕັດຕອນອາຫານໃຫ້ນ້ອຍຫຼືຕ້ອງເຮັດນ້ຳແກງໃຫ້ຜູ້ພິການ;

   iii. ຜູ້ພິການໄດ້ຮັບການບໍຣິການໂຄງການ IHSS ຕ້ອງການດື່ມນ້ຳແລະ/ຫຼືກິນອາຫານເບົາຣະຫວ່າງໄລຍະເວລາກິນອາຫານ.

   iv. ແຜນການອາຫານແລະແບບກິນຕ່າງກັນກັບສ່ວນເຫຼືອຂອງຄອບຄົວສະນັ້ນຈຶ່ງຕ້ອງຈັດອາຫານຕ່າງຫາກ.

b. ຜູ້ພິການຕ້ອງການອາຫານເຖິງສອງສາມເທົ່າຍ້ອນໂຣຄອຳມະພາດໂດຍການມີແຂນງຸ່ມງ່າມຈຶ່ງຕ້ອງໃຊ້ເວລາອີກຕື່ມເພື່ອ ປຸງແຕ່ງອາຫານ, ການຈັດແຜນລາຍການອາຫານແລະການທຳຄວາມສະອາດ, ການຊື້ອາຫານແລະການປ້ອນອາຫານ.

c. ຕ້ອງໃຊ້ເວລາອີກຕື່ມໃນການທຳຄວາມສະອາດເທິງໂຕະທີ່ເຊັດຖູແລ້ວ, ຕັ່ງລໍ້, ແລະພື້ນໃຫ້ສະອາດຍ້ອນເຮັດອາຫານຕົກເຫຼື່ຽ.

d. ຕ້ອງໃຊ້ເວລາອີກຕື່ມສຳລັບການຊັກເຄື່ອງຍ້ອນວ່າ:

i. ຈຳເປັນຕ້ອງປ່ຽນຜ້າປູນອນແລະເຄື່ອງນຸ່ງເພີ້ມຫຼາຍເທື່ອຍ້ອນວ່າການກັ້ນໄວ້ບໍ່ຢູ່, ການເຮັດສິ່ງຂອງຂອ້ຳແລະ ຄວາມຕ້ອງການຊຳຣະເຄື່ອງນຸ່ງຫົ່ມກ່ອນການລ້າງຊັກ.

ii. ຕ້ອງໃຊ້ເວລາອີກຕື່ມເພື່ອປະຕິບັດການປ້ອງກັນສາກົນທົ່ວໄປເມື່ອເວລາຂອງແຫຼວຮ່າງກາຍມີກ່ຽວຂ້ອງ (ເຊັ່ນນ້ຳປັສສະວະ, ອາຈົມ, ເລືອດ, ນ້ຳລາຍ, ຂີ້ຮາກ) :ຊັ່ນ: ການຊຳຣະ, ການແຍກຈາກເຄື່ອງຈັກຊັກແລະການຊັກຕ່າງຫາກ.

iii. ຍ້ອນນິຂະໂນຍນາລັກເຄື່ອງຈະຕ້ອງໄດ້ຢູ່ເຝົ້າໃນເວລາຊັກເຄື່ອງແລະອົບເຄື່ອງໃຫ້ແຫ້ງ.

iv. ມີຄວາມຕ້ອງການຊຳຣະໄລເຄື່ອງອີກລອບນຶ່ງຍ້ອນເນື້ອໜັງມີຄວາມຮູ້ສຶກໄວ.

e. ຕ້ອງໃຊ້ເວລາອີກຕື່ມເພື່ອໄປຕລາດ, ໄປທຸຣະກິດອື່ນໆຍ້ອນວ່າ:

i. ທາງໄປຕລາດມີໄລຍະທາງໄກ.

ii. ຕ້ອງໄປຕລາດເລື້ອຍໆຫຼືຕ້ອງໄປຫຼາຍບ່ອນເພື່ອຊື້ອາຫານພິເສດຫຼືອາຫານສົດ.

iii. ຕ້ອງໄປຊື້ຢາເລື້ອຍໆຍ້ອນທາງປະກັນພັຍສຂະພາບ Medi-Cal ຈຳກັດຈຳນວນຢາໝໍສັ່ງທີ່ຊື້ເທື່ອດຽວໄດ້ຫຼື ຈະຊື້ຢາຊະນິດທີ່ຕ້ອງການຢູ່ບ່ອນດຽວບໍ່ໄດ້.

iv. ກຳລັງອາສັຍຢູ່ໃນເຂດຊຸມຊົນຊຶ່ງມີລາຍໄດ້ຕ່ຳທີ່ມີຕລາດໜ້ອຍກວ່າແລະມັກມີຄົນແໜ້ນໜາ ຈຶ່ງຕ້ອງລໍຖ້າເຫິງ ກວ່າເພື່ອຊື້ຂອງ.

v. ຕ້ອງໃຊ້ການຂົນສົ່ງສາທາຣະນະ ຫຼືຣົຖໂດຍສານແທັກຊີ.

4. **ໄດ້ປະເມີນເວລາ** (ແລະຄຳແນະນຳໄດ້ອີງຕາມ) ຜູ້ໃຫ້ບໍຣິການໂຄງການ IHSS ທີ່ມີຄຳສັນຍາກັບກົ່ງຣັຖຜູ້ບໍ່ມີການບໍຣິການໃນວັນເສົາ ວັນອາທິດ; ລູກຄ້າມີຄວາມຕ້ອງການແລະມີສິທໄດ້ຮັບບໍຣິການໃນວັນເສົາວັນອາທິດໂດຍບໍ່ຄຳນຶງເຖິງເງື່ອນໄຂຂໍ້ໃດໆທີ່ມີຢູ່ໃນຄຳສັນຍາ ຣະຫວ່າງກົ່ງຣັຖແລະອົງການຕົວແທນບໍຣິການຄົນຮັບໃຊ້/ຄົນທຳຄວາມສະອາດເຮືອນ.

ຂໍສະແດງຄວາມຂອບອົກຂອບໃຈກັບຍານາງ Jennifer Pittam ຂອງ C.H.O.I.C.E.S.S. ຜູ້ໄດ້ຮ່ວມປະກອບຂໍ້ມູນຕ່າງໆທັງຫຼາຍເຫຼົ່ານີ້.

# III. ການບໍລິການໂຄງການ IHSS ໂດຍສະເພາະ ໂຄງການບໍລິການ IHSS ສຳລັບເດັກ

## 1. ເດັກສາມາດໄດ້ຮັບການບໍລິການໂຄງການ IHSS ແນວໃດໄດ້ແດ່?

△ ການຮັກສາສ່ວນຕົວ (ການອາບນ້ຳ, ການໃຊ້ສ້ວມຖ່າຍ, ການປ້ອນອາຫານ, ການຊ່ວຍຍ່າງ, ແລະອື່ນໆຢ່າງນີ້).

△ ການບໍລິການທີ່ກ່ຽວຂ້ອງ (ການປຸງແຕ່ງອາຫານ, ການອາງແຜນແລະການທຳຄວາມສະອາດ, ການຊັກເຄື່ອງ, ການໄປຊື້ອາຫານ).

△ ການບໍລິການດ້ານການແພທທົ່ວໄປ, (ຖ້າທ່ານໝໍໄດ້ສັ່ງໃຫ້ (ການສັກຢາ, ການໃຊ້ທໍ່ແຍ່ຍ່ວ, ການປ້ອນອາຫານໂດຍໃຊ້ທໍ່ທີ່ສັກເຂົ້າໄປໃນກະເພາະອາຫານ, ການດູດ)).

△ ການຄວບຄຸມເພື່ອປ້ອງກັນ (ການເຝົ້າຕະຫຼອດ 24 ຊົ່ວໂມງແລະການຄວບຄຸມເພື່ອຫຼີກລ່ຽງການຖືກບາດເຈັບ).

- ບໍ່ແມ່ນການຮັກສາຫຼືການຄວບຄຸມເດັກແບບທັມມະດາ.
- ຈະຕ້ອງສະແດງຄວາມແຕກຕ່າງກັນຣະຫວ່າງເດັກພິການແລະເດັກຄົນອື່ນທີ່ມີອາຍຸສ່ຳກັນ.

△ ບໍ່ມີການບໍຣິການທຳຄວາມສະອາດເຮືອນ.

△ ໂດຍທາງທິສະດີແລ້ວ, ຖ້າວ່າພໍ່ແມ່ບໍ່ໄດ້ເປັນຜູ້ໃຫ້ການບໍຣິການໂຄງການ IHSS, ເຂົາເຈົ້າສາມາດຖືກອະນຸມັດການພັກພ່ອນ 8 ຊົ່ວໂມງຕໍ່ອາທິດເມື່ອພໍ່ແມ່ພ້ອມໄປຕລາດ, ໄປທຳທຸຣະກິດອື່ນ, ຫຼືກຳລັງເຮັດແນວອື່ນແກ່ຄອບຄົວ.

## 2. ເດັກອາດໄດ້ຮັບການບໍຣິການໂຄງການ IHSS ເມື່ອໃດແນ່?

△ ເມື່ອມີອາການພິການແລະມີລາຍໄດ້ຕ່ຳ (ຜູ້ທີ່ໄດ້ຮັບເງິນ SSI ໝາຍຄວາມວ່າມີສິທໄດ້ຮັບຢ່າງອັດຕະໂນມັດ)

△ ຖ້າລາຍໄດ້ສູງໂພດເພື່ອໄດ້ຮັບເງິນ SSI ໄດ້, ອາດມີເງື່ອນໄຂໄດ້ຮັບການແບ່ງປັນຣາຄາ.

△ ຖ້າພໍ່ແມ່ຢູ່ນອກເຮືອນໄປທຳງານ, ໄປໂຮງຮຽນ, ໄປຮັບການຝຶກຝົນ.

△ ຖ້າພໍ່ແມ່ບໍ່ສາມາດໃຫ້ບໍຣິການຮັກສາຍ້ອນເຂົາເປັນພິການຫຼືເຈັບປ່ວຍ.

△ ຖ້າພໍ່ແມ່ກຳລັງນອນຫຼັບຫຼືກຳລັງຮັກສາດູແລສະມາຊິກຄົນອື່ນໃນຄອບຄົວ.

## 3. ພໍ່ແມ່ສາມາດໄດ້ຮັບເງິນຄ່າແຮງງານໃນຖານະເປັນຜູ້ໃຫ້ບໍຣິການໂຄງການ IHSS ເມື່ອໃດແນ່?

△ ຖ້າພໍ່ແມ່ໄດ້ລາອອກງານຫຼືບໍ່ສາມາດຫາງານໄດ້ຍ້ອນວ່າເຂົາຈຳເປັນຕ້ອງຮັກສາດູແລລູກພິການ, ແລະ

△ ຖ້າບໍ່ມີຜູ້ໃຫ້ບໍຣິການທີ່ເໝາະສົມຜູ້ອື່ນທີ່ຈະເຮັດການນັ້ນໄດ້ (ສມັກໃຈແລະສາມາດ), ແລະ

△ ຖ້າເດັກມີການສ່ຽງທີ່ຈະຕ້ອງໄປອາສັຍຢູ່ນອກເຮືອນຫຼືມີການຮັກສາເບິ່ງແຍງບໍ່ພຽງພໍ.

△ ຖ້າພໍ່ແມ່ທັງສອງຄົນອາສັຍຢູ່ໃນເຮືອນ, ຄົນນຶ່ງອາດໄດ້ຮັບເງິນຄ່າຈ້າງໄດ້ເມື່ອຄົນອື່ນເຮັດການຢູ່, ໄປໂຮງຮຽນ, ກຳລັງນອນຫຼັບ, ຫຼື ເປັນຄົນພິການ.

△ ການຈ່າຍເງິນນັ້ນຈະບໍ່ມີຜົນກະທົບຕໍ່ເງິນຊ່ວຍເຫຼືອ SSI ຂອງເດັກແຕ່ຈະມີຜົນກະທົບຕໍ່ເງິນຊ່ວຍເຫຼືອສະຫວັດດີການຂອງຄອບ ຄົວຫຼືກະທົບເງື່ອນໄຂໄດ້ລັບປະກັນພັຍທາງແພທ Medi-Cal.

**4. ຂ້ອຍສາມາດໄດ້ຮັບການບໍລິການໂຄງການ ຮ໊;; ແລະຍັງໄດ້ຮັບການຊ່ວຍເຫຼືອການພັກຜ່ອນຈາກສູນກາງເຂດອີກບໍ?**

ໄດ້ຮັບ. ການບໍລິການການພັກຜ່ອນຈາກສູນກາງເຂດແຕກຕ່າງກັນກັບຂອງໂຄງການ IHSS. ທ່ານສືບຄອນໄດ້ຮັບບໍລິການໂຄງການ IHSS, ຮວມທັງການຄວບຄຸມການປ້ອງກັນໄດ້, ໂດຍບໍ່ເສັຽການພັກຜ່ອນຈັກຊົ່ວໂມງ. ໃຫ້ໂທຣ໌ຫາ PAI ຖ້າທາງສູນກາງເຂດພະຍາຍາມຈະຕັດການພັກຜ່ອນຂອງທ່ານຍ້ອນວ່າທ່ານໄດ້ຮັບການບໍລິການໂຄງການ IHSS.

## ການຄວບຄຸມການປ້ອງກັນບໍລິການໂຄງການ IHSS

**1. ການຄວບຄຸມການປ້ອງກັນບໍລິການໂຄງການ IHSS ແມ່ນຫຍັງ?**

ການຄວບຄຸມການປ້ອງກັນແມ່ນການເຝົ້າຄົນທີ່ມີອາການຂາດຄວາມສາມາດທາງຈິດຢ່າງຮ້າຍແຮງເພື່ອວ່າຈະໄດ້ຖືກບາດເຈັບໃນເວລາອາສັຍຢູ່ເຮືອນ. ຜູ້ໃຫ້ການບໍລິການໂຄງການ IHSS ອາດໄດ້ຮັບເງິນຄ່າແຮງງານໄດ້ທີ່ເຝົ້າດູແລເດັກຫຼືຜູ້ໃຫຍ່ເພື່ອປ້ອງກັນບາດເຈັບຫຼືອຸບັດເຫດ, ເມື່ອຄົນດັ່ງກ້າວຕ້ອງການການຄວບຄຸມຕລອດ 24 ຊົ່ວໂມງແລະຖ້າມີການຈັດຫາໃຫ້ຈະສາມາດຢູ່ເຮືອນໄດ້ດ້ວຍຄວາມປອດພັຍຕໍ່ໄປ.

**2. ເປັນຫຍັງການຄວບຄຸມການປ້ອງກັນຈຶ່ງສຳຄັນ?**

ພວກຄົນທີ່ມີສິທໄດ້ຮັບການຄວບຄຸມການປ້ອງກັນໄດ້ຮັບຈຳນວນຊົ່ວໂມງໃນແຕ່ລະເດືອນສູງທີ່ສຸດຢູ່ສເມີ, ຢ່າງໜ້ອຍ 195 ສຳລັບຄົນພິການບໍ່ຮ້າຍແຮງແລະ 283 ສຳລັບຄົນທີ່ພິການ "ຢ່າງຮ້າຍແຮງ". ເຖິງແມ່ນວ່າທາງກົງຣັຖໄດ້ຕັດຊົ່ວໂມງສຳລັບການບໍລິການ ໂຄງການ IHSS ຢ່າງອື່ນກໍຕາມ ພວກເຂົາຈະໄດ້ຮັບຈຳນວນຊົ່ວໂມງສູງທີ່ສຸດຂອງເຂົາ.

**3. ເງື່ອນໄຂຂອງສິທທີ່ໄດ້ຮັບແມ່ນຫຍັງ?**

- △ ຜູ້ກ່ຽວໄດ້ສະແດງການຂາດຄວາມສາມາດທາງຈິດຢ່າງຮ້າຍແຮງບາງຢ່າງ; ຄວາມສາມາດຕັດສິນໃຈບໍ່ພໍ (ຕັດສິນໃຈບໍ່ຖືກກ່ຽວກັບສະພາບຫຼືຄວາມປອດພັຍ), ການສັບສົນ/ບໍ່ສາມາດປະມານທິດທາງ (ການອອກໄປເອງ, ການຫຼົງທາງ, ການສັບສົນກັບຜູ້ຄົນ, ວັນ, ຫຼືເວລາ) ຫຼືການຈື່ ຈຳບໍ່ດີ (ມັກລືມຕັ້ງງານຫຼືເຮັດການໃຫ້ຮຽບຮ້ອຍ). ອາການພິການດັ່ງກ່າວອາດເກີດຂຶ້ນໄດ້ກັບໂຣຄຈິດລ້າຫຼັງ, ການຫຼົງຕົວເອງ, ໂຣຄຜູ້ເຖົ້າ ອອລໄຊເມີແລະໂໂຣຄຈິດເສື່ອມ. *ຄຳແນະນຳເລັກນ້ອຍ: ທາງດີທີ່ສຸດທີ່ຈະສະແດງອາການຂາດຄວາມສາມາດແມ່ນຕົວຢ່າງສິ່ງທີ່ຜູ້ກ່ຽວເຮັດ ຊຶ່ງອາດເກີດບາດເຈັບ. ໃຫ້ເກັບຄຳໃຫ້ການສນັບສນູນຈາກຄົນໃດນຶ່ງທີ່ເຄີຍດູແລຄົນນັ້ນ.*
- △ ຄົນໃດນຶ່ງອາດຖືກບາດເຈັບໄດ້ຖ້າຢູ່ເຮືອນຕາມລຳພັງ (ເຊັ່ນ, ການອອກນອກເຮືອນເອງ, ການໄຂໃຫ້ຄົນແປກໜ້າເຂົ້າມາໃນເຮືອນ, ການເປີດແກັສເຕົາໄຟ, ການດັງໄຟ, ການປ່ອຍນ້ຳໄຫຼໄວ້, ການກິນອາຫານຜິດຫຼືແນວທີ່ບໍ່ເປັນກິນໄດ້, ການເອົາຫົວທຸບຝາ, ການກັດໂຕເອງ, ການຄູດເກົາ, ການໃຊ້ມີດຫຼືເຄື່ອງໃຊ້ຢ່າງອື່ນທີ່ແຫຼມຄົມ). *ຄຳແນະນຳເລັກນ້ອຍ: ໃຫ້ເກັບກຳປື້ມບັນທຶກໄວ້ເພື່ອຈົດເຣື່ອງອຸບັດເຫດທີ່ອາດ ເກີດຂຶ້ນໄດ້ຖ້າຜູ້ກ່ຽວບໍ່ມີການຄວບຄຸມ.*
- △ ຈຳເປັນຕ້ອງຄວບຄຸມຜູ້ນັ້ນຕລອດ 24 ຊົ່ວໂມງຕໍ່ມື້ (ໝູ່ຫຼືພີ່ນ້ອງອາສັຍຢູ່ເຮືອນ, ຄຣູສອນຢູ່ໃນໂຮງຮຽນຫຼືໂຄງການດຳເນີນກາງເວັນ, ແລະຜູ້ຂັບຣົຖຍົນ ຫຼືຣົຖບາສ). *ຄຳແນະນຳເລັກນ້ອຍ: ການບັນທຶກເຣື່ອງໃສ່ປື້ມບັນທຶກປະຈຳວັນຈະສະແດງວ່າການປະພຶດອັນຕະລາຍນັ້ນສາມາດເກີດຂຶ້ນໄດ້ເມື່ອໃດກໍໄດ້ຈະເປັນກາງເວັນຫຼືກາງຄືນ. ຈະສະແດງອີກວ່າເມື່ອໃດຜູ້ໃຫ້ບໍລິການໄດ້ໃຫ້ການຄວບຄຸມປ້ອງກັນເພື່ອຫຼີກລ່ຽງການບາດເຈັບຫຼືອຸບັດເຫດ.*

ບໍ່ມີການຄວບຄຸມການປ້ອງກັນໄວ້:

- △ ສໍາລັບການໄປຢ້ຽມຢາມໝູ່ເພື່ອນ ຫຼືທໍາກິຈະກັມທາງສັງຄົມ.
- △ ເມື່ອເວລາຄວາມຕ້ອງການໄດ້ເນື່ອງມາຈາກສະພາບການທາງແພທ *ແລະ* ຜູ້ກ່ຽວຕ້ອງການການຄວບຄຸມທາງພະຍາບານ.
- △ ໃນການຄາດໝາຍການສຸກເສີນດ້ານພະຍາບານ.
- △ ເພື່ອບັງຄັບຄວາມປະພຶດຕໍ່ຕ້ານສັງຄົມ ຫຼືການປະພຶດທີ່ຮຸນແຮງ.

## 4. ເດັກສາມາດໄດ້ຮັບການຄວບຄຸມການປ້ອງກັນໄດ້ບໍ?

ໄດ້, ແຕ່ວ່າເດັກຜູ້ນັ້ນຕ້ອງມີການຄວບຄຸມຍ້ອນອາການພິການຂອງເຂົາ, ບໍ່ແມ່ນການດູແລເດັກແບບທັມມະດາ. ເດັກຈໍາເປັນຕ້ອງມີການຄວບຄຸມຢ່າງໃກ້ສິດຫຼາຍກວ່າເດັກຄົນອື່ນທີ່ມີອາຍຸສໍາກັນ.

## 5. ຂ້ອຍສາມາດສະແດງວ່າຄົນໃດນຶ່ງຕ້ອງການການຄວບຄຸມການປ້ອງກັນໄດ້ຢ່າງໃດ?

- △ ໃຫ້ເຮັດລາຍງານອຸບັດເຫດຫຼືເຫດການທີ່ໃກ້ເກີດອຸບັດເຫດທຸກເທື່ອທີ່ໄດ້ເກີດຂຶ້ນໃນຫົກເດືອນທີ່ຜ່ານມານີ້.
- △ ໃຫ້ເກັບກໍາບັນທຶກປື້ມປະ ຈໍາວັນ ສໍາລັບສອງອາທິດທີ່ຈະອະທິບາຍກິຈະການທຸກຢ່າງທີ່ຜູ້ກ່ຽວເຮັດທີ່ອາດເກີດບາດເຈັບໄດ້, ແລະກິຈະການນັ້ນມັກເກີດຂຶ້ນຫຼາຍປານໃດ (ເຊັ່ນ, ຍ່າງເຂົ້າຖນົນໂດຍບໍ່ມີການຫຼຽວໜ້າຫຼັງ, ເປີດໄຟເຕົາໄຟ, ແລະລືມປິດເຕົາໄຟ).
- △ ໃຫ້ໄປເອົາຈົດໝາຍຈາກທ່ານໝໍແລະຄວາມຊ່ວຍເຫຼືອຈາກສູນກາງເຂດເພື່ອປຶກສາອາຍແລະລະດັບໜ້າທີ່ເທົ່າທຽມກັນຂອງຜູ້ກ່ຽວ, ແລະອະທິບາຍວ່າຜູ້ນີ້ໄດ້ຂາດຄວາມສາມາດການຈື່ຈໍາ, ຕັດສິນໃຈຜິດໆ, ມີຄວາມສັບສົນ, ຫຼືບໍ່ສາມາດປະມານທິດທາງ.
- △ ໃຫ້ສະແດງວ່າຈະບໍ່ສາມາດເຮັດໃຫ້ເຮືອນມີຄວາມປອດພັຍທັງໝົດໄດ້ສໍາລັບໃຜຜູ້ນຶ່ງ.

## 6. ຂໍ້ແກ້ຕົວຂອງກົ່ງຣັຖແລະຄໍາຕອບທີ່ໃຊ້ສູ້ເຂົາ

ທາງກົ່ງຣັຖມີຄໍາແກ້ຕົວຫຼາຍຢ່າງທີ່ໃຊ້ເພື່ອບອກຄົນວ່າເຂົາເຈົ້າບໍ່ມີສິທໄດ້ຮັບ. ຕໍ່ໄປນີ້ມີລາຍການຄໍາຕອບບາງຢ່າງທີ່ໃຊ້ສູ້ເຂົາໄດ້.

| ຄໍາແກ້ຕົວຂອງກົ່ງຣັຖ | ຄໍາຕອບບາງຢ່າງ |
|---|---|
| | |
| ບໍ່ໄດ້ສັງເກດເຫັນວ່າອາການຂາດຄວາມສາມາດດ້ານຈິດ ເມື່ອເວລາ ມີການລົງຢ້ຽມຢາມທີ່ບ້ານ. | ໃນບັນທຶກປະຈໍາວັນຂອງທ່ານ, ລາຍງານທ່ານໝໍ, ບັນທຶກຂອງສູນ ກາງເຂດ; ເວລາຢ້ຽມຢາມສັ້ນໂພດ, ໄດ້ກວດເບິ່ງການປະພຶດແລະ ບໍ່ໄດ້ສອບ. ຖາມຕາມຄໍາແນະນໍາ; ແບບຟອມ SOC 293 ແຖວ H ໄດ້ສະແດງຄໍາຖາມ 5 ຂໍ້ສໍາລັບອາການຂາດຄວາມສາມາດດ້ານຈິດແຕ່ ຢ່າງດຽວ. |
| ຕ້ອງການການຄວບຄຸມການປ້ອງກັນຍ້ອນການຂາດຄວາມສາມາດດ້ານຮ່າງກາຍ, ບໍ່ແມ່ນຂາດຄວາມສາມາດທາງດ້ານຈິດ. | ບໍ່ໄດ້ເຂົ້າໃຈອາການຈາດຄວາມສາມາດດ້ານຮ່າງກາຍຍ້ອນຂາດຄວາມສາມາດດ້ານຈິດ, ບໍ່ມີຄວາມເຂົ້າໃຈຫຼືບໍ່ເຫັນຄຸນຄ່າຂອງຜົນກະທົບຕໍ່ການກະທໍາຂອງຮ່າງກາຍ ເຊັ່ນວ່າລາວພະຍາຍາມລຸກຂຶ້ນຫຼືຍ່າງໂດຍບໍ່ໃຊ້ການຊ່ວຍເຫຼືອໃນເມື່ອບໍ່ສາມາດເຮັດໄດ້ໂດຍປາສະຈາກການສ່ຽງຕໍ່ການຖືກບາດເຈັບ, ຈະກິນຂອງຫວານເຖິງແມ່ນວ່າມີການສ່ຽງຕໍ່ການບາດເຈັບເປັນໂຣຄເບົາຫວານ, ຈະພະຍາຍາມແກ້ຜ້າພັນແຜອອກຫຼືເຄື່ອງຄໍ້າຈຸນຍ້ອນມັນເຮັດໃຫ້ເຈັບຫຼືມັນເຮັດໃຫ້ແສບ, ແລະອື່ນໆ. |

| ຄຳແກ້ຕົວຂອງກິ່ງຮັດ | ຄຳຕອບບ່າງຢ່າງ |
| --- | --- |
| ອາການຂາດຄວາມສາມາດດ້ານຮ່າງກາຍເກີດການປະພຶດທີ່ມີອັນຕະ<br>ຣາຍ. | ການຂາດຄວາມສາມາດດ້ານຈິດກໍເຮັດໃຫ້ເກີດຄືກັນ;<br>ບໍ່ມີຂໍ້ບັງຄັບໃຫ້ ສະແດງການຂາດຄວາມສາມາດດ້ານຈິດໃຫ້ເປັນ<br>ສາຍເຫດຢ່າງດຽວ. |
| **ມີການປະພຶດຢູ່ເຮືອນທີ່ເປັນອັນຕະຣາຍບໍ?** | |
| ການພິເຄາະອາການຂາດຄວາມສາມາດດ້ານຈິດເປັນທາງການບໍ່<br>ໄດ້ພິສູດຄວາມຕ້ອງການ. | ລາຍງານຂອງທ່ານໝໍໄດ້ສະແດງຄວາມປະພຶດທັມມະດາສະລັບຄົນທີ່ມີ<br>ການພິເຄາະນັ້ນ. |
| ໃນບໍ່ດົນມານີ້ບໍ່ມີອາການບາດເຈັບ. | ຄົນພິການໄດ້ຮັບການແນະນຳເບິ່ງແຍງເປັນຢ່າງດີ. |
| ລາຍງານພະນັກງານກິ່ງຮັດບໍ່ມີຫຼັກຖານຂອງການປະພຶດທີ່ເປັນອັນຕະ<br>ຣາຍເວລາໄປຢ້ຽມຢາມ. | ການປະພຶດບໍ່ບັງເກີດຕາມຊົ່ວໂມງ; ໄດ້ຂາດອັນກ່ອນແລະອັນຫຼັງ;<br>ບໍ່ສາມາດກ່າວອອກຢ່າງກ້ວາງຂວາງຈາກຊົ່ວໂມງນຶ່ງໄປຫາ໒໔ ຊົ່ວໂມງໃນມື້ນຶ່ງ. |
| ການເປັນາມະພາດທາງຮ່າງກາຍ "ຢ່າງສິ້ນເຊີງ"<br>ໄດ້ກີດກັ້ນຄົນປ່ອຍຈາກການກະທຳສິ່ງໃດນຶ່ງທີ່ເປັນອັນຕະຣາຍໄດ້. | ການປະພຶດໂດຍເຈຕະນາລົມທີ່ເປັນອັນຕະຣາຍ, ການດຶງທແຍ່<br>ຢ່ງອອກ, ດຶງທໍ່ໃສ່ກະເພາະອາຫານ, ແລະອື່ນໆ. |
| ຖ້າລາວຕີຄົນຫຼືທຳລາຍຊັພສິນ, ລາວເປັນຜູ້ຮຸກຮານ<br>ແລະຕໍ່ຕ້ານກັບສັງຄົມ. | ຝ່າຍຜູ້ໃຫຍ່: ການທຳລາຍຕົນເອງຄືການກັດຕົນເອງ, ເອົາຫົວທຸບຝາ,<br>ການທຳລາຍຊັພສິນອັນເປັນການທຳລາຍຕົນເອງ,<br>ຊຶ່ງເປັນຂອງທັມມະດາສຳລັບຜູ້ມີອາການເປັນໂຣຄຈິດ.<br>ຝ່າຍເດັກ: ການປະພຶດຮຸກຮານແລະຕໍ່ຕ້ານກັບສັງຄົມເປັນນິສັຍທັມມະດາ. |
| **ມີຄວາມຕ້ອງການການຄວບຄຸມຕລອດ 24 ຊົ່ວໂມງແລະໄດ້ຮັບຫຼືບໍ່?** | |
| ລາວບໍ່ຕ້ອງການ 24 ຊົ່ວໂມງເພາະລາວບໍ່ມີການຄວບຄຸມ ເຊັ່ນເວ<br>ລານັ່ງຂີ່ຣົຖເມ ຫຼືຣົຖຍົນ. | ການຄວບຄຸມຕລອດເວລາ, ບໍຣິເວນຣົຖຍົນ/ຣົຖເມ<br>ມີການຄວບຄຸມ ຣົຖຜູ້ໃຫຍ່. |
| ລາງເທື່ອຜູ້ພິການຖືກປະໄວ້ໃຫ້ຢູ່ຄົນດຽວສະນັ້ນບໍ່ໄດ້ຄວບຄຸມຕລອດ<br>24 ຊົ່ວໂມງ. | ເງິນບໍ່ພໍຈ່າຍ, ມີຄົນມາກອດເບິ່ງ, ມີໂຊກເພາະບໍ່ມີອຸບັດເຫດ, ສຸຂະ<br>ພາບຂອງຜູ້ພິການເສື່ອມລົງ. |
| ຕ້ອງການຖືກຈັບໂຕນຳໄປ,<br>ບໍ່ແມ່ນແຕ່ການເຝົ້າຫຼືການສັ່ງໂດຍປາກ ເປົ່າເທົ່ານັ້ນ. | ການຄວບຄຸມປະກອບດ້ວຍການຈັບຕົວນຳໄປ, ການແຊກແຊງບາງ<br>ຢ່າງນ້ອຍນຶ່ງ. |
| ຄອບຄົວບໍ່ສົ່ງເສີມການເປັນເອກະຣາດຂອງຜູ້ເປັນໂຣຄຈິດລ້າຫຼັງ<br>ນ້ອຍນຶ່ງແຕ່ມັກປ້ອງກັນຫຼາຍໂພດ. | ການມີຄວາມເປັນເອກະຣາດມັກເກີດມີການບາດເຈັບຫຼືເກືອບມີອຸບັດ<br>ເຫດທີ່ຫຼັງ; ຄົນອື່ນ (ທ່ານໝໍປະຈຳສນາງເຂດ)<br>ແນະນຳໃຫ້ມີການ ຄວບຄຸມ ຝຖ ຊົ່ວໂມງ. |
| ໃຫ້ປ່ຽນເຂດແວດລ້ອມເພື່ອເຮັດໃຫ້ການສ່ຽງຫາຍໄປ: ໃຫ້ແກ້ໄຂ<br>ລກບິດຈາກເຕົາໄຟ, ໃຫ້ເອົາເຄື່ອງມືມີ້ນ່ງນໄວ້ໃສ່ກຸນແຈ;<br>ໃຫ້ຄ້ຳຕັ່ງ ລໍ້, ໃຫ້ຮັດສາຍແອວໃສ່ຕັ່ງລໍ້;<br>ໃຫ້ແກ້ລູກບິດຈາກກອັກນ້ຳຮ້ອນ; ໃຫ້<br>ໃຊ້ຝາສູງກວ່າເພື່ອກັ້ນການຍ່າງຫຼັບ; ໃຫ້ເຮັດເຄື່ອງເຮືອນທີ່ຕິດພື້ນ. | ບໍ່ສາມາດປ່ຽນທຸກຢ່າງໄດ້; ຄົນອື່ນປ່ຽນເຮືອນໃຫ້ເປັນຫ້ອງກັກຂັງ,<br>ຜູ້ພິການມີອາຍຸສູງເທົ່າໃດ, ຍິ່ງຈະບໍ່ສາມາດປ່ຽນເຮືອນໄດ້ເທົ່ານັ້ນ<br>ໂດຍບໍ່ໄດ້ສູນເສັ້ຽສະພາບສະເພາະຂອງເຮືອນພັກ. |

| ຄໍາແກ້ຕົວຂອງກົ່ງຣັດ | ຄໍາຕອບບ່າງຢ່າງ |
|---|---|
| ເດັກໄດ້ຫຼິ້ນຢູ່ຂ້າງນອກ ໂດຍບໍ່ໄດ້ມີຜູ້ໃຫຍ່ຄອບຄຸມດູແລ. | ມີຮົ້ວລ້ອມເດີ່ນບ້ານ; ບໍ່ສາມາດປີນຂຶ້ນລົງໄປໄດ້; ບໍ່ມີສິ່ງທີ່ເປັນອັນ ຕະລາຍຢູ່ໃນເດີ່ນບ້ານ. |
| ເດັກຕ້ອງມີການຄອບຄຸມດູແລຂອງຜູ້ໃຫຍ່ສເມີ. | ພໍ່ແມ່ບໍ່ຢູ່ໃນສາຍຕາຂອງເດັກທີ່ບໍ່ພົການເປັນໂຣຄຈິດ; ເດັກຕ້ອງການ ມີການຄອບຄຸມຫຼາຍກວ່າເດັກອື່ນທີ່ມີອາຍຸສໍາກັນ. ເດັກມີອາຍຸຍິ່ງ ນ້ອຍເທົ່າໃດ, ການປະພຶດຕ້ອງຮ້າຍແຮງຍິ່ງຫຼາຍຂຶ້ນເທົ່ານັ້ນ. ລໍາ ບາກທີ່ສຸດສໍາລັບເດັກທີ່ມີອາຍຸຕໍ່າກວ່າ 2 ປີ. |
| ໃຫ້ໄປປ່ຽນເລື່ອງການປະພຶດໃນຫ້ອງຮຽນວິຊາລ້ຽງເດັກ. | ຈະບໍ່ແກ້ໄຂການປະພຶດຮາກຖານ, ເສີຍໄປຮຽນກໍບໍ່ມີຜົນ, ຈະໄປອີກກໍ ໄດ້ແຕ່ຍັງຕ້ອງການເວລາຈົນເຖິງມີການພິສູດແລ້ວ. |
| **ເລື່ອງອື່ນໆ – ຜູ້ພິການເສັ່ງສິທໄດ້ຮັບຫຼືບໍ່?** | |
| ທາງກົ່ງຣັດໄດ້ອະນຸມັດການຄອບຄຸມການປ້ອງກັນໃນທາງຜິດ; ການ ປະເມີນໃໝ່ສະແດງວ່າບໍ່ມີການແຈ້ງການຕັດສິນທີ່ໄດ້ຮັບ. | ບໍ່ມີການປ່ຽນແປງໃນແບບຟອມ SOC 293 ແຖວ H, ກ່ຽວກັບ ລະດັບຂອງໜ້າທີ່ທາງຈິດ; ບໍ່ມີການປ່ຽນແປງໃນເຮືອນຂອງຜູ້ໄດ້ຮັບ ຫຼືໃນສະພາບຮ່າງກາຍ, ໃຫ້ຂໍອທອນທັນທີເພື່ອຮັບບໍຣິການໂຄງການ IHSS ຕໍ່ໄປໄດ້ຈົນກວ່າໄດ້ຮັບຄໍາຕັດສິນແລ້ວ. |
| **ພໍ່ແມ່ມີສິທທີ່ຈະເປັນຜູ້ໃຫ້ບໍຣິການ (ສາມາດແລະມີເວລາ) ຫຼືບໍ່?** | |
| ພໍ່ແມ່ຈະສາມາດເຮັດວຽກເຕັມເວລາ (40 ຊົ່ວໂມງຕໍ່ອາທິດ) ໄດ້ ໂດຍສົ່ງລູກໄປຫ້ອງຮັບເຝົ້າເດັກຫຼັງຈາກເລີກໂຮງຮຽນ (ຣະບຽບ ກ່ຽວກັບພໍ່ແມ່ມີຄວາມສາມາດແລະເວລາຫວ່າງ). | ບໍ່ມີຫ້ອງຮັບຝາກເດັກທີ່ເໝາະສົມ, ບໍ່ສາມາດຈ້າງຄົນເຝົ້າເດັກຕາມ ອັດຕາຄ່າຕໍ່າທີ່ສຸດ, ເດັກຕ້ອງການມີການກະຕຸ້ນຈາກພໍ່ແມ່. |
| ພໍ່ແມ່ຜູ້ນຶ່ງເຮັດວຽກນ້ອຍກວ່າ 40 ຊົ່ວໂມງແຕ່ສາມາດເຮັດວຽກ ເຕັມເວລາໄດ້. | ຕ້ອງໄປຫາທ່ານໝໍເລື້ອຍໆ, ຫຼືມີການສຸກເສີນອື່ນໆ, ຄວາມກົດດັນ, ບໍ່ສາມາດເຮັດວຽກເຕັມເວລາໄດ້, ຖືກໄລ່ອອກງານເຕັມເວລາມາແລ້ວ. |

## ປື້ມຄູ່ມື – ຫ້ອງການບໍລິການສັງຄົມ – SS – ກົດໝາຍອັກ Division 30

30-757 ສາຣະເຣື່ອງໂຄງການ

.17 ການຄວບຄຸມການປ້ອງກັນປະກອບດ້ວຍການສັງເກດຄວາມປະພຶດຂອງຜູ້ໄດ້ຮັບກໍາເພື່ອຈະສິ້ງຊອນເຖິງຄວາມປອດພັຍຂອງຜູ້ພິການຕໍ່ການບາດເຈັບ: ພັຍອັນຕະຣາຍຫຼືອຸບັດເຫດ.

.171 ການບໍຣິການນີ້ໄວ້ເພື່ອຄວບຄຸມການປະພຶດທີ່ບໍ່ເປັນການຊີ້ນໍາຂອງຕົນເອງ, ການສັບສົນ, ການເປັນພິການທາງຈິດໃຈ, ຫຼືເປັນຜູ້ມີ ໂຣຄຈິດ, ກັບຂໍ້ຍົກເວັ້ນດັ່ງຕໍ່ໄປນີ້:

(a) ການຊີ້ນໍາການຄວບຄຸມການປ້ອງກັນບໍ່ໄດ້ປະກອບດ້ວຍການຢ້ຽມຢາມຫຼິ້ນກັບໝູ່ເພື່ອຫຼືການເຮັດກິຈະກັມທາງສັງຄົມຕ່າງໆ.

(b) ການຄວບຄຸມບໍ່ມີເທື່ອເວລາຄວາມຕ້ອງການທີ່ມີສາຍເຫດເກີດຈາກສະພາບທາງການແພທແລະແບບຟອມຂອງການຄວບຄຸມຊຶ່ງ ຖືກຮຽກຮ້ອງກ່ຽວກັບການແພທ.

(c) ການຄວບຄຸມບໍ່ມີໃນຄວາມຄາດໝາຍຂອງການສກເສີມທາງການແພທ.

(d) ການຄວບຄຸມບໍ່ມີເພື່ອຫຼີກລ່ຽງຫຼືຄວບຄຸມການໂຈມຕີ–ສັງຄົມຫຼືການປະພຶດທີ່ເປັນການຈູ່ໂຈມຂອງຜູ້ພິການ.

.172 ການຄວບຄຸມການປ້ອງກັນມີໃຫ້ພາຍໃຕ້ສະພາບການດັ່ງຕໍ່ໄປນີ້:

(a) ພະນັກງານຮັບໃຊ້ສັງຄົມໄດ້ຕັດສິນວ່າຄວາມຕ້ອງການຊາວສີ່–ຊົ່ວໂມງສໍາລັບການຄວບຄຸມການປ້ອງກັນໄດ້ເກີດຂຶ້ນ ແລະທີ່ວ່າ ຜູ້ພິການສາມາດຍັງຢູ່ໃນເຮືອນດ້ວຍຄວາມປອດພັຍຖ້າຫາກມີການຄຸ້ມຄອງການປ້ອງກັນໃຫ້.

(b) ພະນັກງານຮັບໃຊ້ຕັດສິນວ່າຄວາມຕ້ອງການຕລອດຊາວສີ່–ຊົ່ວໂມງສໍາລັບການຄວບຄຸມການປ້ອງກັນ ສາມາດປະສົບກັບຄວາມຕ້ອງ ການໂດຍຜ່ານອັນໃດນຶ່ງຕໍ່ໄປນີ້, ຫຼືການປະສົມກັນສິ່ງຕໍ່ໄປນີ້:

(1) ການບໍຣິການໂຄງການ IHSS

(2) ແຫຼ່ງຊັພະຍາກອນສໍາຮອງຕ່າງໆ

(3) ການບໍຣິການໂທຣະສັບທີ່ຮັບປະກັນຢ່າງເປັນໄປໄດ້ ແລະເປັນທີ່ເໝາະສົມ.

.173 ພະນັກງານຮັບໃຊ້ຄວນຈະຕ້ອງໂອ້ລົມກັບຜູ້ປ່ວຍ, ຫຼືຜູ້ດູແລຂອງຜູ້ປ່ວຍ ຫຼື ຜູ້ຮັກສາ, ຄວາມເໝາະສົມຂອງການຮັກສາດູແລນອກ ບ້ານເປັນໂຄງການສໍາຮອງຂອງການຄວບຄຸມການປ້ອງກັນ.

# ການບໍລິການໂຄງການ IHSS ທາງການແພທ

## 1. ການບໍລິການດ້ານການແພທແມ່ນຫຍັງ?

ທ່ານໝໍໄດ້ສັ່ງການບໍລິການທາງການແພທເພື່ອສຸຂະພາບຂອງຄົນຜູ້ນຶ່ງແລະຕ້ອງການຝຶກຝົນບາງຢ່າງແລະຄວາມສາມາດຕັດສິນໃຈເພື່ອດຳເນີນງານໄດ້. ການບໍລິການທົ່ວໄປແມ່ນ ການສັກຢາ, ການລ້າງທໍ່ໃຊ້ແທນລຳໄສ້ໃຫຍ່, ການສັກທໍ່ແຍ່ຍ່ຽວເຂົ້າ/ການຮັກສາ, ການດູດການປ້ອນອາຫານໂດຍທໍ່ກະເພາະອາຫານ, ເຄື່ອງຊ່ວຍຫາຍໃຈແລະການຮັກສາລົມອອັກຊີເຢັນ, ລຳໄສ້ອັດແໜ້ນໂດຍອາຈົມ, ໄລຍະທາງເຄື່ອນເພື່ອເຮັດໜ້າທີ່ດີກວ່າເກົ່າ, ການຮັກສາບາດແຜ/ແຜຕຽງແລະການບໍລິການຢ່າງອື່ນທີ່ຕ້ອງດຳເນີນໃນທາງປາສະຈາກເຊື້ອ. *ບັນຫາໃຫຍ່ທີ່ສຸດ:* ຜູ້ໃຫ້ການບໍລິການບໍ່ມັກຂໍເວລາພຽງພໍທີ່ຈະສາມາດເຮັດການບໍລິການໃຫ້ສຳເຣັດໄດ້, ຈາກການຈັດການຈົນເຖິງການທຳຄວາມສະອາດ. ຜູ້ໃຫ້ການບໍລິການບໍ່ມັກຂໍເວລາເພີ້ມຕື່ມທີ່ອາດຮຽກຮ້ອງເພື່ອການເກັບກຳບັນທຶກ – ເຊັ່ນວ່າການກວດໂຣຄເບົາຫວານ ແລະການຄວບຄຸມດູແລການສັກຢາ.

## 2. ເປັນຫຍັງການບໍລິການທາງດ້ານການແພທຈຶ່ງມີຄວາມສຳຄັນ?

ຄົນທີ່ຕ້ອງການໄດ້ຮັບການຮັກສາພະຍາບາລທີ່ຫຍຸ້ງຍາກຈະສາມາດຢູ່ເຮືອນໄດ້ແທນທີ່ຈະໄປນອນໂຮງໝໍຜູ້ເຖົ້າ. ມີແຕ່ທ່ານໝໍເທົ່ານັ້ນທີ່ຕັດສິນວ່າມີການບໍລິການແນວໃດແດ່ທີ່ທາງກົ່ງຣັຖຕ້ອງບໍລິການແລະຈຳນວນຊົ່ວໂມງທີ່ຕ້ອງຈ່າຍຄ່າໃຫ້. ທາງກົ່ງຣັຖບໍ່ສາມາດຕັດຊົ່ວໂມງການບໍລິການທີ່ທ່ານໝໍໄດ້ສັ່ງໃຫ້ແລ້ວ. ຜູ້ໃຫ້ການບໍລິການນັ້ນບໍ່ຕ້ອງມີໃບອະນຸຍາດພິເສດເພື່ອດຳເນີນການບໍລິການ.

## 3. ເງື່ອນໄຂຂອງສິທທິໄດ້ຮັບແມ່ນຫຍັງ?

a. ທ່ານໝໍໄດ້ຂຽນແລະເຊັນຊື່ຄຳສັ່ງການບໍລິການພ້ອມກັບຈຳນວນຊົ່ວໂມງທີ່ຕ້ອງການ: ທ່ານໝໍຂອງຜູ້ພິການໄດ້ຕັດສິນເງື່ອນໄຂຂອງສິທທິທຸກຂໍ້ໂດຍໄດ້ເຊັນຊື່ຄຳສັ່ງການບໍລິການແລະຊົ່ວໂມງ.

b. ຄົນຜູ້ນັ້ນບໍ່ສາມາດດຳເນີນການບໍລິການຈັກນ້ອຍ:
ອາການບໍ່ມີຄວາມສາມາດທາງດ້ານຈິດຫຼືທາງຮ່າງກາຍໄດ້ກີດກັ້ນຄົນນັ້ນບໍ່ໃຫ້ເຮັດການ ບໍລິການ, ເຊັ່ນການສັກຢາຫຼືການປ່ຽນແປງທໍ່ແຍ່ຍ່ຽວ.

c. ການບໍລິການໄດ້ກຳນົດການຝຶກຝົນແລະຄວາມສາມາດຕັດສິນໃຈເພື່ອດຳເນີນໄດ້: ຜູ້ໃຫ້ການບໍລິການໄດ້ຮັບການຝຶກຝົນຈາກທ່ານໝໍກ່ຽວກັບຂັ້ນຕ່າງໆທີ່ຕ້ອງເຮັດແລະວິທີເຮັດແຕ່ລະຂັ້ນນັ້ນເພື່ອເຮັດໃຫ້ການບໍລິການຮຽບຮ້ອຍ. ຂັ້ນນັ້ນ ກຳນົດໃຫ້ກວດເບິ່ງວ່າຜູ້ພິການຢ່າງຣະມັດຣະວັງ ເພື່ອຫຼີກເວັ້ນຈາກການເຮັດຜິດພາດ.

## 4. ຂ້ອນສົມຄວນສມັກຂໍການບໍລິການດ້ານການແພທໄດ້ຢ່າງໃດ?

ໃນເທື່ອທຳອິດ ໃຫ້ປຶກສາກັບທ່ານໝໍຜູ້ທີ່ປິ່ນປົວກ່ຽວກັບການບໍລິການທີ່ຕ້ອງການແລະແຕ່ລະຂັ້ນທຸກຂັ້ນທີ່ຕ້ອງເຮັດເພື່ອເຮັດໃຫ້ຮຽບຮ້ອຍຢ່າງຖືກຕ້ອງ. ແລ້ວພາຍໃນອາທິດນຶ່ງ ໃຫ້ຕຽມປື້ມປະຈຳວັນເພື່ອບັນທຶກການບໍລິການແຕ່ລະຢ່າງວ່າໄດ້ເຮັດຈັກເທື່ອ ແລະຕ້ອງໃຊ້ເວລາດົນປານໃດ ເພື່ອເຮັດໃຫ້ສຳເຣັດ ສຳລັບວຽກແຕ່ລະຢ່າງ ເລີ້ມຈາກການເລີ້ມຈັດການຈົນຮອດສຳເຣັດທຳຄວາມສະອາດ. ເອົາລາຍລະອຽດຈຳນວນຊົ່ວໂມງໄປໃຫ້ທ່ານໝໍ ເພື່ອປະກອບແຟ້ມຟອມ SOC 321.

## 5. ຂໍ້ແກ້ຕົວຂອງກົ່ງຣັຖແລະຄໍາຕອບທີ່ໃຊ້ສູ້ເຂົາໄດ້

ພວກກົ່ງຣັຖໄດ້ໃຊ້ວິທີທາງຫຼາຍຢ່າງເພື່ອທໍາການປະຕິເສດຫຼືດັດແປງການບໍຣິການທີ່ທ່ານໝໍອະນຸຍາດແລ້ວ. ວິທີຕ່າງໆຫຼາຍຢ່າງທີ່ໃຊ ້ໄດ້ເພື່ອ ຕໍ່ສູ້ເຂົາ.

| ວິທີຂອງກົ່ງຣັຖ | ວິທີຕອບເຂົາ |
|---|---|
| ທາງກົ່ງຣັຖໄດ້ບອກວ່າການບໍຣິການບາງຢ່າງອາດຖືກອະນຸມັດເປັນການບໍຣິການທາງແພທບໍ່ໄດ້. | ໃຫ້ປຶກສາການບໍຣິການນີ້ກັບທ່ານໝໍ. ໃຫ້ອະທິບາຍວ່າການບໍຣິການແນວໃດທີ່ເຂົາເກັບຄ່າວ່າເປັນການພະຍາບາລທີ່ມີການຊໍານານພາຍໃຕ້ເງື່ອນໄຂໄດ້ຮັບປະກັນພັຍ Medi-Cal/Medicare. ພວກທ່ານໝໍເຄີຍຮູ້ຈັກວ່າແນວນີ້ແມ່ນຫຍັງ. |
| ທາງກົ່ງຣັຖພະຍາຍາມຊັກຊວນທ່ານໝໍໃຫ້ປ່ຽນຄໍາສັ່ງການບໍຣິການຫລືຊົ່ວໂມງຮັບໃຊ້. | ໃຫ້ປຶກສາກັບທ່ານໝໍກ່ອນແລະຮັບອະນຸມັດຊົ່ວໂມງທີ່ອີງຕາມປຶ້ມປະຈໍາວັນຂອງທ່ານ. ໃຫ້ປຶກສາສະພາບການຂອງທ່ານແລະຄວາມຕ້ອງການໃຫ້ປ້ອງກັນການພົວພັນກັນຣະຫວ່າງທ່ານໝໍແລະຜູ້ເຈັບປ່ວຍຈາກອິທິພົນທາງຂ້າງນອກ. ໃຫ້ອະທິບາຍວ່າຄໍາຕັດສິນຂອງທ່ານໝໍທີ່ຕິດແບບຟອມ 321 ທີ່ມີລາຍເຊັນເປັນຕາຍຕົວແລ້ວແລະທາງກົ່ງຣັຖຕ້ອງປະຕິບັດຕາມ. |
| ນາງພະຍາບາລຂອງກົ່ງຣັຖໄດ້ກວດເບິ່ງແຕ່ວັນດຽວແລະໄດ້ຫຼຸດຊົ່ວໂມງໂດຍອີງຕາມການກວດເຫັນຂອງລາວແລ້ວໂທຣ໌ຫາທ່ານໝໍ. | ປຶ້ມປະຈໍາວັນສະແດງວ່າເວລາມັກປ່ຽນໄປມາ; ເວລາສະເລັ່ຽກໍຫຼາຍກວ່າເວລາຂອງວັນກວດເຫັນ. |
| ອົງການສຸຂະພາບຢູ່ເຮືອນຈະບໍຣິການໃຫ້, ໃຫ້ໄປສມັກຂໍຢູ່ທີ່ນັ້ນກ່ອນ. | ໃຊ້ເປັນແຫຼ່ງແທນການບໍ່ໄດ້ ເພາະວ່າອົງການສຸຂະພາບຢູ່ເຮືອນນັ້ນມີການບໍຣິການທີ່ຈໍາກັດຕໍ່ເວລາ. |
| ໄລຍະທາງເຄື່ອນໄຫວເປັນການບໍຣິການສ່ວນຕົວ ຊຶ່ງທາງກົ່ງຣັຖມີໜ້າທີ່ຕັດສິນສິທທິທີ່ໄດ້ຮັບແລະຊົ່ວໂມງ. | ເມື່ອທ່ານໝໍສັ່ງໄລຍະທາງເຄື່ອນໄຫວ ເພື່ອຮັກສາແລະເຮັດໃຫ້ໜ້າທີ່ **ດີຂຶ້ນ** ພ້ອມໆກັນ, ການບໍຣິການນັ້ນກໍຢູ່ໃນດ້ານການແພທ. |
| ທາງກົ່ງຣັຖໄດ້ປະຕິເສດການເຝົ້າເບິ່ງສໍາລັບການບໍຣິການດ້ານການແພທສະເພາະບາງຢ່າງ. | ທ່ານໝໍໄດ້ສັ່ງການເຝົ້າເບິ່ງເພື່ອດໍາເນີນການບໍຣິການໄດ້. ເຖິງນີ້ນີ້ທາງຣັຖບໍ່ເຄີຍອະນຸມັດການເຝົ້າເບິ່ງ (ການເຝົ້າຕລອດເວລາໂດຍຜູ້ຊ່ຽວຊານ) ໃຫ້ເປັນການບໍຣິການດ້ານການແພທ. ສໍາລັບຄວາມຊ່ວຍເຫຼືອ, ໃຫ້ໂທຣ໌ຫາ PAI ເພື່ອເອົາໜັງສືທີ່ລົງວັນທີ 12/30/94 ກ່ຽວກັບເຣື່ອງນີ້. ຖ້າມີການແຊກແຊງຫຼາຍເທື່ອ ເພື່ອໃຫ້ການບໍຣິການ, ຈໍານວນຊົ່ວໂມງທັງໝົດອາດເທົ່າກັນກັບຈໍານວນຊົ່ວໂມງສູງທີ່ສຸດ (283). |

# ກົດໝາຍວ່າດ້ວຍການສະຫວັດດີການ & ສະຖາບັນ § 12300.1
# "ການບໍຣິການແບບສນັບສນູນ"

ເໝືອນກັນກັບໄດ້ໃຊ້ຢູ່ໃນກົດໝາຍວັກ Section 12300 ແລະໃນກົດວ່າດ້ວຍ "ການບໍຣິການແບບສນັບສນູນ" ປະກອບມີການບໍຣິການທາງພະຍາບານທີ່ຈຳເປັນທົ່ວໄປເຫຼົ່ານັ້ນ ຊຶ່ງຖືກສັ່ງການໂດຍທ່ານໝໍນັກວິຊາຊີພ ທີ່ມີໃບອະນຸຍາດ ຜູ້ຊຶ່ງຖືກອະນຸມັດທາງກົດໝາຍ ໃຫ້ປະຕິບັດດັ່ງນີ້, ຊຶ່ງແມ່ນບາກຄົນທີ່ສາມາດຈັດຫາໃຫ້ຕົນເອງໄດ້ແຕ່ເປັນການປະຕິບັດທີ່ມີຂອບເຂດຈຳກັດຂອງເຂົາເຈົ້າ. ການບໍຣິການທາງການແພທທົ່ວໄປ ປະກອບມີ ການຄວບຄຸມທາງການຢາ, ການສັກຜີວໜັງ ແລະການຍັດເຄື່ອງແພທເຂົ້າໄປໃນຮ່າງກາຍ, ກິຈະກັມຕ່າງໆທີ່ຮຽກຮ້ອງພິທີດຳເນີນການຜ່າຕັດ, ຫຼືກິຈະກັມອື່ນໆທີ່ຮຽກຮ້ອງການຕັດສິນວິງຕາມການຝຶກຝົນທີ່ໄດ້ຮັບອະນຸຍາດອອກໃຫ້ໂດຍທ່ານໝໍນັກວິຊາຊີພ ທີ່ມີໃບອະນຸຍາດ. ການບໍຣິການທີ່ເຫັນວ່າມີຄວາມຈຳເປັນເຫຼົ່ານີ້ສົມຄວນຕ້ອງຖືກຮັບໃຊ້ໂດຍຜູ້ດູແລຮັກສາພາຍໃຕ້ການຊີ້ນຳຂອງທ່ານໝໍນັກວິຊາຊີພທີ່ມີໃບອະນຸຍາດໂດຍມີສິທແຈ້ງການສົມຍອມຈາກຜູ້ປ່ວຍທີ່ໄດ້ຮັບໃນນາມເປັນສ່ວນຂອງຄຳສັ່ງ ເພື່ອການບໍຣິການ. ສິ່ງນຶ່ງແລະອັນທີ່ກ່ຽວຂ້ອງທັງໝົດໄປເຖິງວັກຕອນຂອງກົດໝາຍ Section 12300 ໃນນະທີ່ນີ້ ຫຼືພາຍພາກໜ້າ ປະຕິບັດກົດສົມຄວນຕ້ອງຖືກເຫັນສົມຄວນວ່າໃຫ້ເປັນຂໍ້ອ້າງໄປຍັງກົດວັກຕອນນີ້. ຂໍ້ອ້າງທີ່ເປັນຮູບຮ່າງທັງໝົດກັບການບໍຣິການແບບສນັບສນູນ ໄດ້ເຈາະຈົງສະເພາະໃນກົດໝາຍວັກ Section 12300 ຈະຕ້ອງຖືກເຫັນສົມຄວນເພື່ອປະກອບການບໍຣິການທາງການແພທທົ່ວໄປ.

# ການບໍລິການໂຄງການ IHSS ສຳລັບຄົນທີ່ມີອາການເປັນໂຣຄຈິດ

## 1. ຄົນທີ່ມີອາການເປັນໂຣຄຈິດສາມາດໄດ້ຮັບການບໍລິການໂຄງການ IHSS ໄດ້ບໍ?

ໄດ້, ການບໍລິການໂຄງການ IHSS ບໍ່ແມ່ນສຳລັບແຕ່ຄົນທີ່ມີອາການພິການທາງຮ່າງກາຍ ຫຼືດ້ານເຕີບໂຕເທົ່ານັ້ນ. ຄົນທີ່ມີອາການເປັນໂຣຄຈິດ ອາດມີສິທທິໄດ້ຮັບອີກດ້ວຍ ຖ້າເຂົາຕ້ອງການຄວາມຊ່ວຍເຫຼືອ ເພື່ອຢູ່ໃນເຮືອນຂອງຕົນ[1] ຫຼືຢູ່ໃນເຮືອນຂອງພີ່ນ້ອງ.

## 2. ຂ້ອຍຈະສະແດງວ່າຂ້ອຍໄດ້ຮັບການບໍລິການໂຄງການ IHSS ໄດ້ຢ່າງໃດ?

ຕໍ່ໄປນີ້ມີສາຍເຫດຊຶ່ງຄົນທີ່ມີອາການພິການອາດຕ້ອງການຄວາມຊ່ວຍເຫຼືອໂດຍທາງບໍລິການໂຄງການ IHSS ຫຼືການບໍລິການສ່ວນຕົວເພື່ອສາມາດຢູ່ໃນເຮືອນຂອງຕົນເອງຫຼືໃນເຮືອນຂອງພີ່ນ້ອງຫຼືໝູ່ເພື່ອນ:

1. ຕ້ອງການມີການ "ປຸກລຸກ"[2] ("prompts") ເພື່ອລຸກຂຶ້ນໃນຍາມເຊົ້າແລະເຮັດການ ເຊັ່ນ ການອາບນ້ຳ, ຫວີຜົມ, ນຸ່ງເຄື່ອງ, ກິນຢາ, ກິນເຂົ້າ. ການປຸກລຸກແລະການຊ່ວຍຈັດການເປັນລຳດັບແມ່ນຄຳສັບທີ່ອະທິບາຍການຊ່ວຍເຫຼືອທີ່ພວກຄົນຕ້ອງການເພື່ອເລີ້ມຕົ້ນເຮັດການແລະຜ່ານຈາກຂັ້ນນຶ່ງໄປຍັງອີກຂັ້ນອື່ນ. ຍ້ອນອາການພິການຫຼືຜົນຂ້າງຄຽງຂອງການກິນຢາ, ຄົນຜູ້ນັ້ນບໍ່ອາດສາມາດເຮັດແນວນັ້ນຢ່າງສມ່ຳສເມີກັນໄດ້ ນອກຈາກທີ່ມີຄົນໃດນຶ່ງຢູ່ນຳເພື່ອຊ່ວຍເຂົາດຳເນີນການເປັນລຳດັບໄປ.
2. ອີກຄືກັນ, ອາດຈະຕ້ອງການມີການ "ປຸກລຸກ" ເພື່ອຊ່ວຍຄົນໃຫ້ຜ່ານໜ້າທີ່ຕ່າງໆທີ່ນຳໄປເຖິງເວລາເຂົ້ານອນ.
3. ການປຸງແຕ່ງອາຫານຊຶ່ງຄົນອາດບໍ່ສາມາດເຮັດໄດ້ຢ່າງສມ່ຳສເມີກັນແລະຢ່າງປອດພັຍໄດ້ເມື່ອເວລາຢູ່ເຮືອນຄົນດຽວ.
4. ເຕືອນສະຕິເວລາຂອງການກິນເຂົ້າ ແລະການດື່ມນ້ຳ.
5. ການໄປຕລາດ, ການທຳຄວາມສະອາດ, ການຊັກເຄື່ອງ, ການວາງແຜນລາຍການອາຫານ.
6. ມີຄວາມຕ້ອງການຄວບຄຸມແລະແຊກແຊງໃນຖານະ "ການຄວບຄຸມການປ້ອງກັນ" ຍ້ອນວ່າຄົນນັ້ນອາດເຫັນແນວທີ່ຈະມີອັນຕະຣາຍໃຫ້ເປັນແນວທີ່ປອງມຜັນຫຼືຄວບຄຸມເທື່ອໃໝ່ແລະເປັນແນວທີ່ຄົນນັ້ນເຊື່ອວ່າຕ້ອງໂຕ້ຕອບຊຶ່ງອາດເກີດການທຳລາຍຕົວ. ໃນກໍຣະນີດັ່ງກ່າວຄົນນັ້ນອາດຕ້ອງຖືກຊັກຊວນໃຫ້ຄິດເຖິງແນວອື່ນເພື່ອຊ່ວຍໃຫ້ເຫັນວ່າບໍ່ມີການຂົ່ມຂູ່ຫຼືບໍ່ຕ້ອງເຮັດຫຍັງເພື່ອຫຼີກລຽງຈາກການປາດເຈັບ.

---

[1] "ເຮືອນ" ອາດເປັນຫ້ອງແຖວທີ່ທ່ານແບ່ງປັນກັບຄົນອື່ນຫຼືເປັນຫ້ອງໃນໂຮງແຮມ. ທ່ານບໍ່ມີສິທໄດ້ຮັບການບໍຣິການໂຄງການ IHSS ສຳລັບການບໍຣິການສ່ວນຕົວ ຖ້າທ່ານຢູ່ໃນສະຖາບັນລ້ຽງອາຫານແລະການຮັກສາຫຼືໂຮງໝໍພັກ. ຢ່າງໃດກໍດີ, ການບໍຣິການເຫຼົ່ານີ້ອາດຊ່ວຍທ່ານໃຫ້ຍ້າຍອອກຈາກສະຖາບັນລ້ຽງອາຫານ ແລະການຮັກສາໄປເຂົ້າຫ້ອງແຖວ ຫຼືຫ້ອງໂຮງແຮມຂອງຕົນໄດ້.

[2] ໂຄງການ "ປຸກລຸກ" ແລະການ "ແນະນຳ" ແລະການ "ຈັດເປັນລຳດັບ" ເປັນການແຊກແຊງໂດຍທາງຮ່າງກາຍແລະການວາຈາ ເພື່ອແພ້ອປະສັກພິການໃນການເລີ້ມເຮັດວຽກ, ການເຮັດວຽກນັ້ນຕາມຂັ້ນທີ່ຈຳເປັນເພື່ອເຮັດໃຫ້ຮຽບຮ້ອຍ, ການຕິດຕາມຂັ້ນລຳດັບທີ່ຖືກຕ້ອງ ເພື່ອເຮັດວຽກນັ້ນໃຫ້ຮຽບຮ້ອຍ. ອາການທີ່ຈຳກັດໜ້າທີ່ທີ່ໃຊ້ໄດ້ເປັນພື້ນຖານໃນການຕັດສິນວ່າມີອາການຂາດຄວາມສາມາດດ້ານຈິດໃຈ ເພື່ອຕັ້ງເງື່ອນໄຂໄດ້ຮັບເງິນຊ່ວຍເຫຼືອ SSI ນັ້ນປະກອບມີ "ການຂາດຄວາມສາມາດໃນການຮ່ວມຄິດ, ຄວາມອົດທົນ ຫຼືການຕັ້ງບາດກ້າວທີ່ເກີດການບໍ່ສາມາດເຮັດວຽກໃຫ້ຮຽບຮ້ອຍຕາມເວລາທີ່ສົມຄວນໄດ້ຢູ່ເລື້ອຍໆ..." ນີ້ມາຈາກສ່ວນນຶ່ງຂອງເງື່ອນໄຂ "B" ພາຍໃຕ້ການລາຍງານການຂາດຄວາມສາມາດດ້ານຈິດໃຈ 12.01, ບົດຕໍ່ປນ ອະນສ່ວນ P, 20 CFR ສ່ວນ 404. :ງື່ອນໄຂ "B" ຢ່າງອື່ນມີ "ການຈຳກັດກິຈະກັມຊີວິດປະຈຳວັນທີ່ຈຳກັດຫຼາຍ" ແລະ "...ການປະພຶດທີ່ໃຊ້ແກ້ໄຂບັນຫາເສື່ອມລົງ".

## 3. ຂ້ອຍຈະສາມາດຫາຫຼັກຖານທີ່ຈະພິສູດຄວາມຕ້ອງການໄດ້ຮັບການບໍຣິການໂຄງການ IHSS ໄດ້ຢ່າງໃດ?

ພວກພະນັກງານສ່ວນຫຼາຍຂອງກົມສັງຄົມແລະສົງເຄາະຜູ້ທີ່ພິຈາຣະນາໃບສມັກຂໍການບໍຣິການ IHSS ຫຼືການບໍຣິການສ່ວນຕົວມັກເຮັດວຽກກັບຄົນພິການດ້ານຮ່າງກາຍ (ເຂົາໃຊ້ຕັ່ງລໍ້ຫຼືມີຫຼາຍຢ່າງທີ່ບໍ່ສາມາດເຮັດໄດ້ຍ້ອນວ່າເປັນຂໍ່ອັກເສບຢ່າງຮ້າຍແຮງ) ຫຼືເປັນພິການໃນດ້ານຄວາມຮູ້ຄວາມເຂົ້າໃຈ (ສະໝອງເສື່ອມຫຼືຄົນສູງອາຍຸທີ່ເປັນໂຣຄອອລໄຊເມີ). ເຂົາເຈົ້າບໍ່ເຄີຍໃນການພິຈາຣະນາໃບສມັກຈາກຄົນພິການເປັນໂຣຄຈິດ. ນີ້ໝາຍຄວາມວ່າພະນັກງານກົງຣັຖຈະຕ້ອງຮັບຄວາມຊ່ວຍເຫຼືອເພີ້ມຕື່ມຈາກທ່ານ ແລະພວກຄົນທີ່ຊ່ວຍທ່ານເພື່ອເຂົ້າໃຈສາຍເຫດຊຶ່ງທ່ານຕ້ອງການມີຄົນຮັກສາທ່ານຢູ່ໃນເຮືອນທ່ານ. ທ່ານຈະຕ້ອງການຈົດໝາຍຈາກທ່ານໝໍຈິຕະແພທຫຼືພະນັກງານສັງຄົມທີ່ປະຈໍາຄລີນິກທີ່ທ່ານໄປນັ້ນ ຫຼືທ່ານໝໍຈິຕະວິທະຍາທີ່ທ່ານໄດ້ພົບຫຼືຜູ້ຈັດເຣື່ອງຂອງທ່ານ-- ຫຼືຄົນໃດນຶ່ງທີ່ຊ່ວຍທ່ານແລະຮູ້ຈັກຄວາມຕ້ອງການຂອງທ່ານ. ຈົດໝາຍຄວນອະທິບາຍເຣື່ອງດັ່ງຕໍ່ໄປນີ້:

(a) ສິ່ງໃດໆທີ່ທ່ານຕ້ອງການໄດ້ຮັບເພື່ອຊ່ວຍເຫຼືອໃຫ້ເຮັດແລະປະເພດຂອງຄວາມຊ່ວຍເຫຼືອທີ່ທ່ານຕ້ອງການ.

(b) ເປັນຫຍັງທ່ານຈຶ່ງຕ້ອງການຄວາມຊ່ວຍເຫຼືອປະເພດນັ້ນກໍຍ້ອນການພິການຂອງທ່ານ. ຕົວຢ່າງ, ທ່ານໝໍຈິຕະແພທຫຼືພະນັກງານສັງຄົມຫຼືທ່ານໝໍຈິຕະວິທະຍາທີ່ທ່ານໄປພົບນັ້ນສາມາດອະທິບາຍວ່າຢາທີ່ທ່ານກິນຮ່ວມກັບອາການພິການຂອງທ່ານໄດ້ສ້າງຄວາມລໍາບາກໃຫ້ທ່ານໃນການລຸກຂຶ້ນທັນໂມງແລະດໍາເນີນກິຈະກັມປະຈໍາຕອນເຊົ້າບໍ່ໄດ້ຖ້າບໍ່ມີການຊ່ວຍເຫຼືອ.

(c) ໃນກໍຣະນີທີ່ບໍ່ໄດ້ຮັບການຊ່ວຍເຫຼືອທີ່ຕ້ອງການນັ້ນອາດໄດ້ສ້າງກໍຣະນີທີ່ຈະບໍ່ສາມາດອາສັຍຢູ່ໃນເຮືອນຂອງຕົນເອງ ຫຼືຫ້ອງໂຮງແຮມ ຫຼືຫ້ອງແຖວຕໍ່ໄປໄດ້.

(d) ໃນກໍຣະນີທີ່ບໍ່ໄດ້ຮັບຄວາມຊ່ວຍເຫຼືອອາດເຮັດໃຫ້ສະພາບສຸຂະພາບເສື່ອມລົງໄດ້. ຕົວຢ່າງ, ໂດຍບໍ່ໄດ້ຮັບການຊ່ວຍເຫຼືອລຸກຂຶ້ນຢືນທຸກວັນຕາມໂມງກໍານົດແລະການຊ່ວຍຮັກສາຫ້ອງແຖວໃຫ້ສະອາດ, ຊີວິດປະຈໍາວັນຂອງທ່ານອາດຮູ້ສຶກຂາດຣະບຽບວິນັຍແລະຈະນໍາທ່ານໃຫ້ມີເຫດການຫຍຸ້ງຍາກໄດ້. ໂດຍບໍ່ມີການຊ່ວຍເຫຼືອຮັກສາຄວາມເປັນຣະບຽບວິນັຍໃນຊີວິດຂອງທ່ານ, ທ່ານມີການສ່ຽງທີ່ຈະເກີດເຫດການຫຍຸ້ງຍາກທີ່ອາດເຮັດໃຫ້ທ່ານຕ້ອງໄປຫ້ອງສຸກເສີນກໍໄດ້.

## 4. ຂ້ອຍຈະໄປຫາຄວາມຊ່ວຍເຫຼືອໃນການສມັກຂໍບໍຣິການໂຄງການ IHSS ໄດ້ຢູ່ໃສ?

ຖ້າຫາກວ່າທ່ານຫຼືພວກຄົນທີ່ກໍາລັງຊ່ວຍທ່ານມີບັນຫາໃນການຫາການບໍຣິການຄົນເຝົ້າຮັກສາທີ່ທ່ານຕ້ອງການ, ໃຫ້ໂທຣ໌ຫາ ຫ້ອງການ Protection & Advocacy ຢູ່ທີ່ເລກ 1-800-776-5746. ໃຫ້ຂໍການນັດໝາຍເວລາເຂົ້າໄປພົບຜູ້ຊ່ວຍສູ້ເພື່ອສິທ. ສິທທິຂອງຄົນພິການດ້ານໂຣຄຈິດໃນການໄດ້ຮັບບໍຣິການໂຄງການ IHSS ຫຼືການບໍຣິການຮັກສາສ່ວນຕົວທີ່ເຂົາຕ້ອງການເພື່ອອາສັຍຢູ່ໃນເຮືອນຂອງຕົນເອງແມ່ນເຣື່ອງສໍາຄັນທີ່ສຸດສໍາລັບພວກເຮົາ.